ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ເລກທີ:__________ /ກວຕ

ນະຄອນຫຼວງວຽງຈັນ, ວັນທີ

(ຮ່າງ)

# ຂໍ້ຕົກລົງ

## ຂອງລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ກ່ຽວກັບ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງການເຄື່ອນໄຫວຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມ ການຄົ້ນຄວ້າສະເໜີຂອງ ກົມຊັບສິນທາງປັນຍາຊັບສິນທາງປັນຍາ, ສະບັບເລກທີ.... /ກຊປ, ລົງວັນທີ .........

### ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ກຳນົດລະບຽບການ ແລະ ຂັ້ນຕອນ ກ່ຽວກັບ ການຄຸ້ມຄອງ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕໍ່ກັບການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ; ການຈຳກັດ ແລະ ການຍົກເວັ້ນ ສິດຕໍ່ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ; ການໂອນສິດ; ການເປັນຕົວແທນ; ອົງການຈັດຕັ້ງລິຂະສິດແບບລວມໝູ່ ແລະ ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2 ການອະທິບາຍຄຳສັບ**

ນອກຈາກຄຳອະທິບາຍທີ່ໄດ້ກຳນົດຢູ່ໃນມາດຕາ 3 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ), ເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017, ຄຳສັບຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມ

ໝາຍດັ່ງນີ້:

1. **ສານປະຊາຊົນ** ໝາຍເຖິງ ສານ ທີ່ມີສິດອຳນາດພິຈາລະນາ ຕັດສິນຄະດີ ກ່ຽວກັບ ຊັບສິນທາງປັນຍາ;
2. **ຜູ້ຮ້ອງຂໍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຂໍແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຫຼື ຜູ້ສືບທອດຜົນປະໂຫຍດ ຂອງບຸກຄົນດັ່ງກ່າວ ຫຼື ໃນກໍລະນີຜູ້ຮ້ອງຂໍແມ່ນ ອົງການຈັດຕັ້ງລິຂະສິດແບບລວມໝູ່ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຂໍສ້າງຕັ້ງອົງການຈັດຕັ້ງລິຂະສິດແບບລວມໝູ່;
3. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານການຍື່ນຄຳຮ້ອງຂໍແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ຂໍສ້າງຕັ້ງອົງການຈັດຕັ້ງລິຂະສິດແບບລວມໝູ່;
4. ນັກປະພັນ ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນ ທີ່ໄດ້ປະດິດຄິດແຕ່ງ ຜົນງານ ທາງດ້ານສິລະປະກຳ, ວັນນະກຳ ແລະ ຜົນງານທາງດ້ານວິທະຍາສາດ ຊຶ່ງສະແດງອອກ ດ້ວຍຮູບແບບ ຫຼື ວິທີການໃດໜຶ່ງ. ໃນກໍລະນີທີ່ຜົນງານດັ່ງກ່າວ ຫາກເກີດຈາກການມີສ່ວນຮ່ວມໃນການປະດິດຄິດແຕ່ງຂອງສອງ ຫຼື ຫຼາຍຄົນ ຊຶ່ງເຮັດໃຫ້ເກີດຜົນງານຮ່ວມກັນ, ບຸກຄົນດັ່ງກ່າວນັ້ນ ກໍຈະເປັນນັກປະພັນຮ່ວມ. ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນ; ຄຳວ່າ ນັກປະພັນ ລວມເອົານັກປະພັນໝົດທຸກຄົນທີ່ມີສ່ວນຮ່ວມໃນຜົນງານນັ້ນ;
5. ການໂອນສິດ ໝາຍເຖິງ ການໂອນສິດຈາກເຈົ້າຂອງ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃຫ້ແກ່ຜູ້ຮັບສິດ;
6. ໃບໂອນສິດ ໝາຍເຖິງ ເອກະສານທາງດ້ານກົດໝາຍທີ່ໄດ້ກຳນົດ ກ່ຽວກັບການໂອນສິດ;
7. ການອະນຸຍາດແບບມີຂອບເຂດ ໝາຍເຖິງ ການອະນຸຍາດໃຫ້ບຸກຄົນ ຫຼື ກຸ່ມຄົນ ນຳໃຊ້ຜົນງານທີ່ມີລິຂະສິດລ່ວງໜ້າ ພາຍໃຕ້ເງື່ອນໄຂທີ່ໄດ້ກຳນົດໂດຍບໍ່ຢູ່ໃນການອະນຸຍາດນຳໃຊ້ສະເພາະ;
8. ການອະນຸຍາດນຳໃຊ້ສະເພາະ ແມ່ນການຕົກລົງກ່ຽວກັບການອະນຸຍາດນຳໃຊ້ສະເພາະປະເພດຜົນງານໃດໜຶ່ງກັບທຸກການປະພັນ, ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບ;
9. ການອະນຸຍາດນຳໃຊ້ ໝາຍເຖິງ ການຕົກລົງໃຫ້ຜູ້ອື່ນນຳໃຊ້ສິດ ກ່ຽວກັບ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເພື່ອນຳໃຊ້ສະເພາະແຕ່ພຽງຜູ້ດຽວ ແລະ ລວມທັງການຕົກລົງບໍ່ໃຫ້ດຳເນີນການທາງກົດໝາຍຕໍ່ຜູ້ໄດ້ຮັບອະນຸຍາດນຳໃຊ້ສິດດັ່ງກ່າວຕາມເງື່ອນໄຂຂອງສັນ ຍາ;
10. ຜູ້ໄດ້ຮັບອະນຸຍາດ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນຳໃຊ້ຈາກເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;
11. ຜູ້ອະນຸຍາດນຳໃຊ້ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມອບສິດນຳໃຊ້ຂອງຕົນບາງສ່ວນ ຫຼື ທັງໝົດ ໃຫ້ແກ່ຜູ້ໄດ້ຮັບອະນຸຍາດນຳໃຊ້ສິດໃດໜຶ່ງ.
12. ການອະນຸຍາດນຳໃຊ້ສິດແບບຜູກຂາດ ໝາຍເຖິງ ການຕົກລົງ ລະຫວ່າງ ເຈົ້າຂອງສິດ ແລະ ຜູ້ໄດ້ຮັບອະນຸຍາດ ໂດຍມອບສິດທັງໝົດ ໃຫ້ແກ່ຜູ້ໄດ້ຮັບສິດ ຊຶ່ງຜູ້ມອບຈະບໍ່ມີສິດຕໍ່ຜົນງານດັ່ງກ່າວໃນໄລຍະຂອງການໄດ້ຮັບອະນຸຍາດ;
13. ການອະນຸຍາດນຳໃຊ້ສິດແບບບໍ່ຜູກຂາດ ໝາຍເຖິງ ການຕົກລົງ ລະຫວ່າງ ເຈົ້າຂອງສິດ ແລະ ຜູ້ໄດ້ຮັບອະນຸຍາດ ໂດຍມອບສິດໃຫ້ແກ່ຜູ້ໄດ້ຮັບອະນຸຍາດ ແຕ່ຍັງຮັກສາທັງສອງສິດຄື: ສິດໃນການສະແຫວງຫາຜົນປະໂຫຍດ ແລະ ສິດໃນການອະນຸຍາດໃຫ້ບຸກຄົນອື່ນນຳໃຊ້ລິຂະສິດ

ດັ່ງກ່າວ;

14. ການອະນຸຍາດນຳໃຊ້ສິດຕໍ່ຊ່ວງ ໝາຍເຖິງ ການຕົກລົງລະຫວ່າງ ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ສິດແບບຜູກຂາດ ກັບບຸກຄົນອື່ນ ໂດຍໄດ້ມອບສິດຂອງຕົນທັງໝົດ ຫຼື ສ່ວນໃດສ່ວນໜຶ່ງໃຫ້ແກ່ບຸກຄົນອື່ນ;
15. ການແຈ້ງຂໍ້ມູນ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ໝາຍເຖິງ ການແຈ້ງກ່ຽວກັບສິດ ແລະ ຜົນງານ ທີ່ໄດ້ຍື່ນຕໍ່ກົມຊັບສິນທາງປັນຍາ ຫຼື ຜູ້ຖືສິດອື່ນ ເພື່ອຢັ້ງຢືນເຖິງສິດຕໍ່ກັບຜົນງານຂອງການເປັນຜູ້ປະພັນ ຫຼື ຜູ້ຖືສິດ ຕາມມາດຕາ 97 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ; ຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ ຫຼື ຜູ້ຖືສິດອື່ນ ເພື່ອຢັ້ງຢືນເຖິງສິດກ່ຽວຂ້ອງກັບລິຂະສິດ ຕໍ່ການສະແດງ ຫຼື ການບັນທຶກສຽງ ຫຼື ການບັນທຶກສຽງ-ພາບ ຫຼື ການກະຈາຍສຽງ ຫຼື ການກະຈາຍສຽງ-ແຜ່ພາບຕາມມາດຕາ 98 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ;
16. ໃບມອບສັນທະ ໝາຍເຖິງ ເອກະສານ ຊຶ່ງເຈົ້າຂອງສິດໄດ້ມອບອຳນາດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນ
17. ຜູ້ມອບສັນທະ ໝາຍເຖິງ ຜູ້ທີ່ມອບສິດຂອງຕົນ ໃຫ້ບຸກຄົນໜຶ່ງ ຫຼື ຫຼາຍບຸກຄົນ ເຮັດໜ້າທີ່ແທນຕົນໃນການແຈ້ງຂໍ້ມູນລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ຫຼື ດຳເນີນການອື່ນໆຕໍ່ກັບກົມຊັບສິນທາງປັນຍາ;
18. ຜູ້ຕາງໜ້າ ໝາຍເຖິງ ທະນາຍຄວາມ ຫຼື ຕົວແທນທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ໃຫ້ແຈ້ງຂໍ້ມູນ ຫຼື ດຳເນີນການອື່ນໆຕໍ່ກັບກົມຊັບສິນທາງປັນຍາ;
19. ເຈົ້າຂອງສິດ ຫຼື ຜູ້ຖືສິດ ໃນກໍລະນີລິຂະສິດ ໝາຍເຖິງ ນັກປະພັນ; ໃນກໍລະນີ ສິດກ່ຽວຂ້ອງກັບລິຂະສິດ ໝາຍເຖິງ ຜູ້ສະແດງ, ຜູ້ຜະລິດ ຫຼື ຜູ້ກະຈາຍສຽງ-ແຜ່ພາບ ຫຼື ບຸກຄົນທີ່ໄດ້ຮັບການໂອນສິດ ຫຼື ສືບທອດຜົນປະໂຫຍດ ຫຼື ສືບທອດມູນມໍລະດົກ ຫຼື ບຸກຄົນອື່ນທີ່ໄດ້ຮັບສິດຕາມກົດໝາຍ;
20. ຜົນງານທີ່ປະພັນຮ່ວມກັນ ໝາຍເຖິງ ສິ່ງທີ່ປະດິດຄິດແຕ່ງຂຶ້ນໂດຍນັກປະພັນ ແຕ່ສອງຄົນຂຶ້ນໄປ, ຊຶ່ງແຕ່ລະຄົນໄດ້ປະກອບສ່ວນສ້າງຜົນງານຕົ້ນສະບັບ ແລະ ການປະກອບສ່ວນຜົນງານຂອງແຕ່ລະນັກປະພັນແມ່ນບໍ່ສາມາດຕັດແຍກອອກຈາກກັນໄດ້ເວັ້ນເສຍແຕ່ມີການຕັດອອກ ຫຼື ປ່ຽນແປງຮູບແບບຂອງການສະແດງອອກຂອງຜົນງານນັ້ນ.

**ມາດຕາ 3 ການປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ທຸກຜົນງານຂອງນັກປະພັນຈະໄດ້ຮັບການປົກປ້ອງ ເປັນລິຂະສິດ ຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ທຸກຜົນງານຂອງ ຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ, ຜູ້ກະຈາຍສຽງ-ແຜ່ພາບ ຫຼື ອົງການກະຈາຍສຽງ-ແຜ່ພາບ ຈະໄດ້ຮັບການປົກປ້ອງສິດກ່ຽວຂ້ອງກັບລິຂະສິດ ຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 4 ຜົນງານການປະພັນທີ່ໄດ້ຮັບສິດການປົກປ້ອງ**

ທຸກການປະດິດຄິດແຕ່ງຜົນງານໃນຂົງເຂດສິລະປະກຳ, ວັນນະກຳ ແລະ ວິທະຍາສາດ, ບໍ່ວ່າຈະເປັນການ ສະແດງອອກຢູ່ໃນຮູບແບບໃດ ຫຼື ວິທີໃດກໍ່ຕາມຈະໄດ້ຮັບການປົກປ້ອງເປັນລິຂະສິດ ຕາມທີ່ໄດ້

ກຳນົດໄວ້ໃນມາດຕາ 92 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້, ຊຶ່ງການປະດິດຄິດແຕ່ງຜົນງານດັ່ງກ່າວ ຕ້ອງແມ່ນຜົນງານທີ່ແທ້ຈິງຂອງນັກປະພັນ. ຍົກເວັ້ນ ຜົນງານດັ່ງກ່າວ ຫາກສຳເນົາມາຈາກແຫຼ່ງອື່ນ ຈະຖືວ່າບໍ່ແມ່ນຜົນງານທີ່ແທ້ຈິງຂອງນັກປະພັນ.

ຜົນງານທີ່ຖືວ່າ ເປັນຜົນງານການປະດິດຄິດແຕ່ງທີ່ແທ້ຈິງຂອງນັກປະພັນກໍຕໍ່ເມື່ອຜົນງານດັ່ງກ່າວຖືກນຳສະເໜີໃນຮູບແບບໃດໜຶ່ງໂດຍສະແດງໃຫ້ເຫັນເຖິງຄວາມພະຍາຍາມໃນການປະດິດຄິດແຕ່ງຜົນງານນັ້ນ.

ຜົນງານທີ່ຈະໄດ້ຮັບການປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ບໍ່ຈຳເປັນຕ້ອງແມ່ນຜົນງານໃໝ່ ຊຶ່ງເນື້ອໃນຂອງຜົນງານດັ່ງກ່າວນັ້ນ ບໍ່ໝາຍວ່າ ບໍ່ເຄີຍມີມາກ່ອນ.

ຜົນງານທີ່ມີການປະດິດຄິດແຕ່ງຂຶ້ນມາໃໝ່ ຈະໄດ້ຮັບການປົກປ້ອງ, ເຖິງແມ່ນວ່າເນື້ອໃນຜົນງານດັ່ງກ່າວມີຄົນອື່ນໄດ້ເວົ້າເຖິງແລ້ວກໍຕາມ.

ການປົກປ້ອງລິຂະສິດຈະກວມເອົາຮູບແບບການນຳສະເໜີ ແລະ ບໍ່ຂຶ້ນກັບເນື້ອໃນຂອງຜົນງານນັ້ນ. ດັ່ງນັ້ນ, ນັກປະພັນຫຼາຍຄົນອາດຈະອີງໃສ່ເນື້ອໃນດຽວກັນ ແຕ່ນຳໃຊ້ຫຼາຍຮູບແບບຂອງການສະແດງອອກໃນຕົ້ນສະບັບ. ການສະແດງອອກຈາກຕົ້ນສະບັບດັ່ງກ່າວ ຈະໄດ້ຮັບການປົກປ້ອງເປັນລິຂະສິດ ໂດຍປະຕິບັດໄດ້ຕາມເງື່ອນໄຂຂອງການປົກປ້ອງ.

ຜົນງານຈະໄດ້ຮັບການປົກປ້ອງລິຂະສິດ ພາຍຫຼັງທີ່ໄດ້ມີການປະດິດຄິດແຕ່ງຜົນງານນັ້ນຂຶ້ນມາ ແລະ ກໍຕໍ່ເມື່ອ:

1. ຜົນງານທີ່ໄດ້ຖືກບັນທຶກເຂົ້າໃນວັດຖຸທີ່ສາມາດຈັບບາຍໄດ້;
2. ຜົນງານການສະແດງອອກຊົ່ວຄາວ ທີ່ສາມາດບັນທຶກໄດ້ດ້ວຍເຄື່ອງບັນທຶກ, ການເກັບຮັກສາ ຫຼື ຜະລິດຊໍ້າສຳເນົາຜົນງານເຫຼົ່ານັ້ນເຂົ້າໃນວັດຖຸທີ່ສາມາດຈັບບາຍໄດ້;
3. ຜົນງານທີ່ສະແດງອອກ ທາງດ້ານວາຈາ, ການສະແດງສົດ ແລະ ການຖ່າຍທອດສົດ ທີ່ໄດ້ມີການບັນທຶກໄວ້;
4. ຜົນງານທີ່ຖືກສ້າງຂຶ້ນໃນຮູບແບບເອເລັກໂຕຣນິກ ທີ່ໄດ້ຖືກບັນທຶກໄວ້ ຫຼື ເກັບຮັກສາໃນວັດຖຸໃດໜຶ່ງ.

ຜົນງານທີ່ຍັງບໍ່ທັນສົມບູນ ຫຼື ອາດຈະມີການປັບປຸງຕາມພາຍຫຼັງ ຈະໄດ້ຮັບການປົກປ້ອງເປັນລິຂະສິດນັບຕັ້ງແຕ່ເວລາທີ່ຖືກບັນທຶກເຂົ້າໃນວັດຖຸທີ່ສາມາດຈັບບາຍໄດ້, ເຖິງວ່າ ນັກປະພັນຈະປັບປຸງ ຫຼື ບໍ່ເອົາຜົນງານດັ່ງກ່າວນັ້ນກໍຕາມ.

ຜົນງານສືບເນື່ອງຈາກລິຂະສິດ ຕ້ອງໄດ້ຮັບການປົກປ້ອງເປັນຜົນງານຕົ້ນສະບັບໃໝ່ ໂດຍບໍ່ໄດ້ລະເມີດສິດຂອງຜູ້ປະດິດຄິດແຕ່ງຜົນງານຕົ້ນສະບັບເດີມ ທີ່ເປັນບ່ອນອີງໃນການສ້າງຜົນງານສືບເນື່ອງຈາກລິຂະສິດ. ສະນັ້ນ, ຜົນງານດັ່ງກ່າວ ຈະເປັນການປະດິດຄິດແຕ່ງຕົ້ນສະບັບໃໝ່ ເຖິງວ່າ ໄດ້ປັບປຸງ ຫຼື ສືບເນື່ອງມາຈາກຜົນງານອື່ນກໍຕາມ, ສິດໃນການສ້າງສັນຜົນງານທີ່ໄດ້ມີການປັບປຸງ ຫຼື ສືບເນື່ອງ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງຜົນງານຕົ້ນສະບັບເດີມ. ຜູ້ປະດິດຄິດແຕ່ງຜົນງານຕົ້ນສະບັບເດີມ ຫຼື ຜູ້ສືບທອດຜົນປະໂຫຍດ ຫຼື ຜູ້ສືບທອດມູນມໍລະດົກ ຂອງບຸກຄົນດັ່ງກ່າວ ສາມາດອະນຸຍາດ ຫຼື ບໍ່ອະນຸຍາດ ຫຼື ອະນຸຍາດໂດຍມີເງື່ອນໄຂ ໃຫ້ປັບປຸງ ຫຼື ສ້າງຜົນງານສືບເນື່ອງຈາກລິຂະສິດ.

### ມາດຕາ 5 ສິ່ງທີ່ບໍ່ສາມາດປົກປ້ອງເປັນລິຂະສິດ

ບົດບັນຍັດທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ແລະ 2 ຂອງມາດຕາ 94 ຂອງກົດໝາຍ ວ່າດ້ວຍຊັບສິນທາງ

ປັນຍາ ບໍ່ໄດ້ໃຫ້ການປົກປ້ອງລິຂະສິດສຳລັບສິ່ງຕໍ່ໄປນີ້:

1. ຂ່າວປະຈຳວັນ ແລະ ເຫດການຕົວຈິງທີ່ເກີດຂຶ້ນ ທີ່ມີລັກສະນະເປັນຂໍ້ມູນຂ່າວສານ;
2. ຄວາມຄິດ, ຂັ້ນຕອນ, ກຳມະວິທີ, ວິທີການປະຕິບັດ ຫຼື ຫຼັກການຄະນິດສາດ;

ສະນັ້ນ, ບໍ່ຈຳເປັນຕ້ອງມີການອະນຸຍາດໃນການຜະລິດຊ້ຳຂໍ້ມູນ ແລະ ຂໍ້ເທັດຈິງ ຫຼື ເພື່ອອະທິບາຍຄວາມຄິດ, ຂັ້ນຕອນ, ກຳມະວິທີ, ວິທີການປະຕິບັດ ຫຼື ຫຼັກການຄະນິດສາດ, ເຖິງວ່າໄດ້ອະທິບາຍຢູ່ໃນຜົນງານອື່ນຜ່ານມາແລ້ວກໍຕາມ, ຊຶ່ງຂໍ້ຍົກເວັ້ນນີ້ບໍ່ໄດ້ກວມເອົາຜົນງານທີ່ບັນຈຸສິ່ງດັ່ງກ່າວ. ສະນັ້ນ, ຂໍ້ຍົກເວັ້ນໃນວັກນີ້ຈະເຮັດໃຫ້ຄົນອື່ນສາມາດນຳເອົາຂໍ້ມູນ ແລະ ເນື້ອໃນຂໍ້ເທັດຈິງຈາກແຫຼ່ງອື່ນມາສ້າງເປັນຜົນງານຂອງຕົນໂດຍບໍ່ຕ້ອງຂໍອະນຸຍາດ ຫຼື ຈະບໍ່ຖືວ່າເປັນການກະທຳທີ່ລະເມີດ, ແຕ່ບໍ່ໃຫ້ສ້າງຜົນງານດັ່ງດຽວກັນກັບຜົນງານນັ້ນ.

ບົດບັນຍັດທີ່ໄດ້ກຳນົດໄວ້ໃນຂໍ້ 3 ໃນມາດຕາ 94 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ບໍ່ໄດ້ໃຫ້ການປົກປ້ອງລິຂະສິດສຳລັບບັນດານິຕິກຳຕ່າງໆ, ລະບຽບການປົກຄອງ ແລະ ເອກະສານທາງດ້ານຕຸລາການ ແລະ ເອກະສານເຫຼົ່ານັ້ນ ທີ່ແປເປັນທາງການ. ໃຫ້ເຂົ້າໃຈວ່າ ບົດບັນຍັດນີ້ ອະນຸຍາດໃຫ້ມີການຜະລິດຊ້ຳ ແລະ ສຳເນົາບັນດານິຕິກຳຕ່າງໆ, ລະບຽບການປົກຄອງ ແລະ ເອກະສານທາງດ້ານຕຸລາການ ແລະ ເອກະສານເຫຼົ່ານັ້ນ ທີ່ແປເປັນທາງການໂດຍບໍ່ຕ້ອງຂໍອະນຸຍາດ. ຂໍ້ຍົກເວັ້ນດັ່ງກ່າວ ກວມເອົາການແປຜົນງານທີ່ເປັນທາງການ, ແຕ່ບໍ່ກວມເອົາການແປຂອງເອກະຊົນ, ຊຶ່ງການຜະລິດຊ້ຳດັ່ງກ່າວ ຈະຕ້ອງໄດ້ຂໍອະນຸຍາດຈາກຜູ້ແປ ທີ່ເປັນສ່ວນບຸກຄົນ ຫຼື ການແປ ທີ່ບໍ່ເປັນທາງການ.

## ໝວດທີ II
## ການແຈ້ງ ຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

### ມາດຕາ 6 ບຸກຄົນທີ່ສາມາດແຈ້ງ ຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

ນັກປະພັນ ຫຼື ຜູ້ວ່າຈ້າງ ຫຼື ຜູ້ສືບທອດຜົນປະໂຫຍດ ຫຼື ຜູ້ສືບທອດມູນມໍລະດົກ ຂອງບຸກຄົນດັ່ງກ່າວ ຫຼື ຜູ້ໄດ້ຮັບສິດໃນລິຂະສິດ ແລະ ສິດດ້ານເສດຖະກິດ ຕາມສັນຍາ ຈະໄດ້ຮັບການປົກປ້ອງລິຂະສິດ ຕາມມາດຕາ 99 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ໂດຍບໍ່ຈຳແນກສັນຊາດ, ສະຖານທີ່ຈັດພິມ ຫຼື ສະຖານທີ່ດຳເນີນທຸລະກິດ ໃນປະເທດທີ່ເປັນພາຄີຂອງສົນທິສັນຍາເບີນ ວ່າດ້ວຍການປົກປ້ອງຜົນງານທາງດ້ານສິລະປະກຳ ແລະ ວັນນະກຳ ສາມາດແຈ້ງຂໍ້ມູນລິຂະສິດນຳກົມຊັບສິນທາງປັນຍາ.

ຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ, ຜູ້ກະຈາຍສຽງ-ແຜ່ພາບ ຫຼື ອົງການກະຈາຍສຽງ-ແຜ່ພາບ ຈະໄດ້ຮັບການປົກປ້ອງສິດກ່ຽວຂ້ອງກັບລິຂະສິດ ຕາມທີ່ໄດ້ກຳນົດຢູ່ໃນ ມາດຕາ 95 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ, ໂດຍບໍ່ຈຳແນກສັນຊາດ ຫຼື ສະຖານທີ່ດຳເນີນທຸລະກິດໃນປະເທດທີ່ເປັນພາຄີຂອງສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ສາມາດແຈ້ງຂໍ້ມູນສິດກ່ຽວຂ້ອງກັບລິຂະສິດນຳກົມຊັບສິນທາງປັນຍາ.

ການແຈ້ງ ຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ສາມາດເຮັດໄດ້ໂດຍການຍື່ນຄຳຮ້ອງເຖິງກົມຊັບສິນທາງປັນຍາ. ກໍລະນີຜູ້ທີ່ບໍ່ມີ ສະຖານທີ່ດຳເນີນທຸລະກິດ ຫຼື ພູມລຳເນົາຢູ່ ສປປ ລາວ ຕ້ອງແຕ່ງຕັ້ງຜູ້ຕາງໜ້າ ເພື່ອດຳເນີນການແທນຕົນ.

ຄຳຮ້ອງຂໍແຈ້ງ ຂໍ້ມູນກ່ຽວກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕ້ອງເປັນພາສາລາວ ຕາມແບບພິມຂອງກົມຊັບສິນທາງປັນຍາ. ທຸກເອກະສານທີ່ຄັດຕິດມາກັບຄຳຮ້ອງຂໍແຈ້ງ ຂໍ້ມູນກ່ຽວກັບລິຂະສິດ

ແລະ ສິດກ່ຽວຂ້ອງກັບລິຂະສິດ ທີ່ເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວເສຍກ່ອນ ເປັນຕົ້ນ: ໃບມອບສັນທະ, ໃບໂອນສິດ, ໃບອະນຸຍາດນໍາໃຊ້ ຫຼື ເອກະສານອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 7 ເງື່ອນໄຂກ່ຽວກັບການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ເພື່ອໄດ້ຮັບການບັນທຶກການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ຜູ້ຮ້ອງຂໍຕ້ອງຍື່ນຄໍາຮ້ອງ ເຖິງກົມຊັບສິນທາງປັນຍາ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ຕາມເງື່ອນໄຂຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້. ກົມຊັບສິນທາງປັນຍາ ຫຼື ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ຈະດໍາເນີນການກວດຄວາມຖືກຕ້ອງ ແລະ ຄົບຖ້ວນຂອງສໍານວນຄໍາຮ້ອງນັ້ນທັນທີ, ເມື່ອເຫັນວ່າ ບໍ່ໄດ້ຕາມເງື່ອນໄຂທີ່ກໍານົດ ກົມຊັບສິນທາງປັນຍາ ຫຼື ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ຈະແຈ້ງໃຫ້ຜູ້ຮ້ອງຂໍນໍາເອົາຄໍາຮ້ອງໄປດັດແກ້ຄືນໃໝ່.

ການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ບໍ່ໃຫ້ເຂົ້າໃຈວ່າເປັນການຈົດທະບຽນເພື່ອໃຫ້ໄດ້ຮັບສິດຄືກັນກັບຊັບສິນອຸດສາຫະກໍາ ຫຼື ພັນພືດໃໝ່. ການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ບໍ່ແມ່ນການຮຽກຮ້ອງສິດ, ຊຶ່ງສິດດັ່ງກ່າວ ແມ່ນໄດ້ເກີດຂຶ້ນທັນທີ ພາຍຫຼັງມີການປະດິດຄິດແຕ່ງຜົນງານນັ້ນ. ການແຈ້ງຂໍ້ມູນດັ່ງກ່າວເປັນພຽງຫຼັກຖານ ທີ່ຢັ້ງຢືນວ່າ ບຸກຄົນທີ່ມີຊື່ໃນໃບຢັ້ງຢືນການແຈ້ງຂໍ້ມູນ ໄດ້ຮຽກຮ້ອງສິດຕໍ່ ຜົນງານ, ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບ ແລະ ການຮຽກຮ້ອງສິດດັ່ງກ່າວ ແມ່ນເກີດຂຶ້ນໃນວັນແຈ້ງຂໍ້ມູນ. ຂໍ້ມູນດັ່ງກ່າວ ສາມາດນໍາໃຊ້ເປັນຫຼັກຖານຢູ່ສານປະຊາຊົນ ໃນການກໍານົດສິດ ແລະ ຍັງເປັນປະໂຫຍດສໍາລັບການດໍາເນີນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການເປັນເຈົ້າຂອງ ຫຼື ສິດອື່ນໆ.

ການຍື່ນຄໍາຮ້ອງຂໍແຈ້ງຂໍ້ມູນສໍາລັບ ຜົນງານ, ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບ ຫາກຄືກັນ ຫຼື ຄ້າຍຄືກັນ ຫຼື ກ່ຽວຂ້ອງກັນ, ກົມຊັບສິນທາງປັນຍາຈະອອກໃບຢັ້ງຢືນແຈ້ງຂໍ້ມູນສະເພາະແຕ່ຄໍາຮ້ອງທີ່ສອດຄ່ອງກັບເງື່ອນໄຂການແຈ້ງຂໍ້ມູນເທົ່ານັ້ນ.

ໃນກໍລະນີ ມີຂໍ້ຂັດແຍ່ງເກີດຂຶ້ນ ກ່ຽວກັບການເປັນເຈົ້າຂອງຜົນງານ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ກົມຊັບສິນທາງປັນຍາຈະບໍ່ດໍາເນີນການແກ້ໄຂໃດໆ, ມີແຕ່ສານປະຊາຊົນເທົ່ານັ້ນ ທີ່ມີສິດພິຈາລະນາຕັດສິນຂໍ້ຂັດແຍ່ງດັ່ງກ່າວ.

**ມາດຕາ 8 ສໍານວນຄໍາຮ້ອງຂໍແຈ້ງ ຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ສໍານວນຄໍາຮ້ອງຂໍແຈ້ງ ຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕ້ອງປະກອບດ້ວຍ:

1. ຄໍາຮ້ອງທີ່ໄດ້ປະກອບຂໍ້ມູນຄົບຖ້ວນຕາມແບບພິມ ຈະເປັນຮູບແບບເຈ້ຍ ຫຼື ຮູບແບບເອເລັກໂຕຣນິກ ກໍ່ໄດ້;
2 ໃບມອບສັນທະ ໃນກໍລະນີທີ່ຍື່ນຄໍາຮ້ອງຜ່ານຜູ້ຕາງໜ້າ;
3 ສໍາເນົາ ຫຼື ຮູບຖ່າຍ ຂອງຜົນງານ, ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບ ຈໍານວນສອງສໍາເນົາ;
4 ໃບຮັບເງິນຄ່າບໍລິການ.

ສໍານວນຄໍາຮ້ອງຂໍແຈ້ງ ຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໜຶ່ງສະບັບໃຊ້ໄດ້ສະເພາະແຕ່ຜົນງານດຽວເທົ່ານັ້ນ. ເຖິງຢ່າງໃດກໍຕາມ, ຄໍາຮ້ອງຂໍແຈ້ງຂໍ້ມູນໜຶ່ງສະບັບ ສາມາດໃຊ້ກັບຊຸດທີ່ມີຫຼາຍຜົນງານ

ທີ່ກ່ຽວຂ້ອງກັນ ເຊັ່ນ: ການລອບລອມ ບົດກະວີ ຫຼື ບົດເພງ.

ສໍາລັບຄ່າບໍລິການ ໃນການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແມ່ນກໍານົດໄວ້ໃນລັດຖະດໍາລັດ ປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ.

**ມາດຕາ 9 ການພິຈາລະນາຄໍາຮ້ອງ**

ພາຍຫຼັງຮັບສໍານວນຄໍາຮ້ອງຂໍແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດແລ້ວ ກົມຊັບສິນທາງປັນຍາຈະອອກໃບຮັບຄໍາຮ້ອງ ຊຶ່ງລະບຸເລກທີ, ວັນທີຮັບຄໍາຮ້ອງ ໃນເມື່ອເຫັນວ່າສໍານວນຄໍາຮ້ອງຄົບຖ້ວນ.

ກົມຊັບສິນທາງປັນຍາ ຈະອອກໃບຢັ້ງຢືນການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃຫ້ຜູ້ຮ້ອງຂໍ ແລະ ບັນທຶກຂໍ້ມູນເຂົ້າໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ພາຍໃນ 15 ວັນລັດຖະການ ນັບແຕ່ວັນຍື່ນຄໍາຮ້ອງ.

ໃນກໍລະນີຜູ້ຮ້ອງຂໍ ມີຈຸດປະສົງຢາກຖອນຄໍາຮ້ອງຂໍແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ກໍ່ສາມາດເຮັດໄດ້, ສ່ວນຄ່າບໍລິການທີ່ຈ່າຍໄປແລ້ວນັ້ນຈະບໍ່ສົ່ງຄືນ.

## ໝວດທີ III
## ການຈໍາກັດ ແລະ ການຍົກເວັ້ນສິດຕໍ່ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

**ມາດຕາ 10 ການໄດ້ຮັບປະໂຫຍດທີ່ໄດ້ມາຈາກການສະແຫວງຫາຜົນໂຫຍດຂອງ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ນັກປະພັນ ຈະໄດ້ຮັບຜົນປະໂຫຍດຈາກການສະແຫວງຫາຜົນປະໂຫຍດ ຕາມສິດທີ່ໄດ້ກໍານົດໄວ້ໃນ ໝວດ 4 ແລະ 7 ຂອງພາກ V ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ ແລະ ຜູ້ກະຈາຍສຽງ-ແຜ່ພາບ ແລະ ອົງການກະຈາຍສຽງ-ແຜ່ພາບ ຈະໄດ້ຮັບຜົນປະໂຫຍດຈາກການສະແຫວງຫາຜົນປະໂຫຍດ ຕາມສິດທີ່ໄດ້ກໍານົດໄວ້ໃນ ໝວດ 5 ແລະ 7 ຂອງພາກ V ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 11 ການຈໍາກັດ ແລະ ການຍົກເວັ້ນ**

ໃນມາດຕາ 115 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໄດ້ກໍານົດກ່ຽວກັບການຈໍາກັດ ແລະ ການຍົກເວັ້ນສິດຂອງເຈົ້າຂອງລິຂະສິດ ແລະ ໃນມາດຕາ 116 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ກໍໄດ້ກໍານົດເງື່ອນໄຂອັນດຽວກັນທີ່ນໍາໃຊ້ກັບ ການສະແດງ, ການບັນທຶກສຽງ ແລະ ການກະຈາຍສຽງ-ແຜ່ພາບ ແລະ ການບັນທຶກຜົນງານເຫຼົ່ານັ້ນ. ບຸກຄົນທີ່ມີເຈດຕະນາອ້າງອີງໃສ່ ບົດບັນຍັດໃນມາດຕານີ້ ຕ້ອງປະຕິບັດບົດບັນຍັດກ່ຽວກັບການຍົກເວັ້ນແຕ່ລະຂໍ້ຢ່າງເຂັ້ມງວດ. ການຍົກເວັ້ນເຫຼົ່ານີ້ ໃຫ້ຖືເປັນກໍລະນີພິເສດ ແລະ ບໍ່ຖືເປັນຫຼັກການທົ່ວໄປ ທີ່ອະນຸຍາດໃຫ້ມີການນໍາໃຊ້ ເພື່ອສະແຫວງຫາຜົນປະໂຫຍດຂອງຜົນງານລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ.

ການອ້າງອີງຜົນງານທີ່ໄດ້ຮັບອະນຸຍາດຕາມ ຂໍ້ 1 ແລະ 2 ຂອງວັກທີ 3 ຂອງມາດຕາ 115 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສາມາດເຮັດໄດ້ພຽງແຕ່ໃນກໍລະນີການຜະລິດຊໍ້າ, ການກະຈາຍສຽງ-ແຜ່

ພາບ ຫຼື ການສື່ສານຜົນງານເຫຼົ່ານັ້ນ ບໍ່ໄດ້ມີການສະຫງວນໄວ້ຢ່າງຈະແຈ້ງ ແລະ ໄດ້ກຳນົດໄວ້ໃນບົດບັນຍັດຂອງມາດຕານີ້.

ການອ້າງອີງຜົນງານ ຈະສາມາດດຳເນີນການໄດ້ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກເຈົ້າຂອງຜົນງານ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ, ກໍຕໍ່ເມື່ອການສະເໜີທີ່ຈະນຳໃຊ້ນັ້ນ ສອດຄ່ອງກັບທຸກເງື່ອນໄຂ ດັ່ງນີ້:

1. ຜົນງານທີ່ຖືກອ້າງອີງນັ້ນ ໄດ້ຖືກເປີດເຜີຍຢ່າງຖືກຕ້ອງຕາມກົດໝາຍສູ່ສາທາລະນະຊົນແລ້ວ;
2. ການອ້າງອີງຜົນງານ ບໍ່ໄດ້ສຳເນົາເອົາເນື້ອໃນເກີນຂອບເຂດຂອງການອ້າງອີງນັ້ນ;ໂດຍສະເພາະບົດບັນຍັດນີ້ ແມ່ນນຳໃຊ້ກັບການອ້າງອີງຈາກບົດຄວາມໃນ ໜັງສືພິມ ແລະ ວາລະສານ ຕ່າງໆ ຢູ່ໃນຮູບແບບການສະຫຼຸບຂ່າວ;
3. ການອ້າງອີງຜົນງານ ໄດ້ມີການລະບຸຊື່ນັກປະພັນ ຫຼື ຜູ້ຖືສິດ ຢ່າງຖືກຕ້ອງ, ລວມທັງແຫຼ່ງທີ່ມາ ແລະ ຊື່ຂອງນັກປະພັນ ຖ້າມີຢູ່ໃນຜົນງານ; ແລະ
4. ການນຳໃຊ້ທີ່ຖືວ່າສອດຄ່ອງກັບການນຳໃຊ້ທີ່ເໝາະສົມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 22 ຂອງຂໍ້ຕົກລົງສະບັບນີ້,ໂດຍສະເພາະບໍ່ໃຫ້ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ແລະ ບໍ່ສ້າງຜົນເສຍຫາຍ ຕໍ່ຜົນປະໂຫຍດອັນຊອບທຳຂອງນັກປະພັນ.

ຜົນງານໃດໜຶ່ງ ອາດຖືກນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ຖືສິດ ແລະ ບໍ່ຈ່າຍຄ່າຕອບແທນໃດໆ, ຖ້າການນຳໃຊ້ທີ່ເໝາະສົມ ທີ່ໄດ້ສະເໜີມານັ້ນ ຫາກສອດຄ່ອງຕາມທຸກເງື່ອນໄຂ ດັ່ງນີ້:

1. ການນຳໃຊ້ຜົນງານທີ່ໄດ້ກ່າວມານັ້ນ ອະນຸຍາດໃຫ້ແຕ່ຈຸດປະສົງຂອງການສິດສອນເທົ່ານັ້ນ, ໝາຍຄວາມວ່າ ນຳໃຊ້ເນື້ອໃນຂອງເອກະສານໂດຍກົງ ເພື່ອຈຸດປະສົງຂອງການສິດສອນ, ແຕ່ບໍ່ໃຫ້ຜະລິດຊ້ຳເອກະສານດັ່ງກ່າວ ເພື່ອພິມຈຳໜ່າຍ ຫຼື ແຈກຢາຍໃນທາງການຄ້າ.
2. ການນຳໃຊ້ຜົນງານທີ່ໄດ້ກ່າວມານັ້ນ ແມ່ນອະນຸຍາດສະເພາະກໍລະນີທີ່ສາມາດຢັ້ງຢືນຈຸດປະສົງຂອງການນຳໃຊ້ເທົ່ານັ້ນ. ຂໍ້ຍົກເວັ້ນດັ່ງກ່າວ ນຳໃຊ້ສະເພາະແຕ່ການຜະລິດຊ້ຳຜົນງານດ້ານວັນນະກຳ ແລະ ຮູບພາບຂອງຜົນງານດ້ານວິຈິດສິນ ເພື່ອຈຸດປະສົງຂອງການສາທິດໂດຍຜ່ານສື່ສິ່ງພິມ ແລະ ການນຳໃຊ້ການກະຈາຍສຽງ-ແຜ່ພາບ ຫຼື ການບັນທຶກສຽງ ຫຼື ສຽງ ແລະ ພາບເພື່ອຈຸດປະສົງຂອງການສິດສອນ. ສະນັ້ນ, ການສາຍພາບ-ສຽງຢູ່ໃນຫ້ອງຮຽນເພື່ອສາທິດເນື້ອໃນຂອງການສິດສອນ, ຕາມປົກກະຕິແລ້ວ ຈະຢູ່ໃນຂອບເຂດຂອງຫົວຂໍ້ນີ້, ແຕ່ການສະແດງຕໍ່ໜ້າສາທາລະນະຊົນ ຫຼື ການຜະລິດຊ້ຳສຳເນົາການບັນທຶກພາບ-ສຽງ ອາດເກີນຂອບເຂດການນຳໃຊ້ທີ່ໄດ້ສະເໜີມານັ້ນ.
3. ເນື້ອໃນຜົນງານທີ່ນຳໃຊ້ມີການອ້າງເຖິງນັກປະພັນ ຫຼື ຜູ້ຖືສິດ, ລວມທັງແຫຼ່ງທີ່ມາ ແລະ ຊື່ຂອງນັກປະພັນ ຖ້າມີຢູ່ໃນຜົນງານນັ້ນ; ແລະ
4. ການນຳໃຊ້ທີ່ຖືວ່າສອດຄ່ອງກັບການນຳໃຊ້ທີ່ເໝາະສົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງຂໍ້ຕົກລົງສະບັບນີ້, ໂດຍສະເພາະບໍ່ໃຫ້ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ແລະ ບໍ່ສ້າງຜົນເສຍຫາຍ ຕໍ່ຜົນປະໂຫຍດອັນຊອບທຳຂອງນັກປະພັນ.

ກົມຊັບສິນທາງປັນຍາອາດຈະອອກຄຳແນະນຳເພີ່ມເຕີມ ໂດຍການອອກແຈ້ງການກ່ຽວກັບຂໍ້ຍົກເວັ້ນດັ່ງກ່າວ. ການຜະລິດຊ້ຳຮູບພາບຂອງຜົນງານດ້ານວິຈິດສິນ, ພາບຖ່າຍ ແລະ ຜົນງານດ້ານສິລະປະອື່ນໆ ແລະ ຜົນງານດ້ານສິລະປະປັບໃຊ້ ໂດຍການຖ່າຍຮູບ ຫຼື ການຖ່າຍຮູບເງົາ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກເຈົ້າຂອງສິດ ແລະ ບໍ່ຕ້ອງຈ່າຍຄ່າທົດແທນ, ຖ້າຫາກການຜະລິດຊ້ຳທີ່ສະເໜີມານັ້ນ ສອດຄ່ອງກັບທຸກເງື່ອນໄຂ ດັ່ງນີ້:

1. ຜົນງານທີ່ຈະຜະລິດຊ້ຳແມ່ນໄດ້ຖືກເຜີຍແຜ່, ຖືກນຳສະເໜີສູ່ສາທາລະນະຊົນ ຫຼື ສື່ສານຕໍ່ສາທາລະນະຊົນໄດ້ຮັບຮູ້ແລ້ວ;
2. ການຜະລິດຊ້ຳດັ່ງກ່າວ ມີຜົນກະທົບໜ້ອຍທີ່ສຸດ ຕໍ່ກັບຜົນງານດ້ານການຖ່າຍຮູບ ຫຼື ການຖ່າຍຮູບເງົາ ແລະ ບໍ່ແມ່ນຈຸດປະສົງຂອງຜົນງານດ້ານການຖ່າຍຮູບ ຫຼື ການຖ່າຍຮູບເງົາ;
3. ການຜະລິດຊ້ຳຈະບໍ່ຂັດກັບການນຳໃຊ້ຜົນງານທົ່ວໄປ ແລະ ຈະບໍ່ລະເມີດຜົນປະໂຫຍດອັນຊອບທຳຂອງນັກປະພັນແບບບໍ່ມີເຫດຜົນ.

ການຜະລິດຊ້ຳ ໂດຍສື່ມວນຊົນ ແລະ ການກະຈາຍສຽງ-ແຜ່ພາບ ຫຼື ການສື່ສານອື່ນຕໍ່ສາທາລະນະຊົນ ສາມາດເຮັດໄດ້ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກນັກປະພັນ ແລະ ບໍ່ຕ້ອງຈ່າຍຄ່າທົດແທນ, ຖ້າຫາກການກະທຳທີ່ສະເໜີມານັ້ນ ສອດຄ່ອງກັບທຸກເງື່ອນໄຂ ດັ່ງນີ້:

1. ການຜະລິດຊ້ຳ ຫຼື ການກະຈາຍສຽງ-ແຜ່ພາບ ຫຼື ການສື່ສານອື່ນກ່ຽວຂ້ອງກັບບົດຄວາມທີ່ໄດ້ລົງໃນໜັງສືພິມ ຫຼື ວາລະສານ;
2. ຫົວຂໍ້ທີ່ຈະຖືກນຳມາຜະລິດຊ້ຳ ຫຼື ກະຈາຍສຽງ-ແຜ່ພາບ ກ່ຽວຂ້ອງກັບບັນຫາທາງດ້ານເສດຖະກິດ, ດ້ານການເມືອງ ຫຼື ສາສະໜາປະຈຸບັນ;
3. ແຫຼ່ງທີ່ມາຂອງເນື້ອໃນຜົນງານ ທີ່ຈະຜະລິດຊ້ຳ ໄດ້ມີການລະບຸຢ່າງຈະແຈ້ງ;
4. ການຜະລິດຊ້ຳດັ່ງກ່າວ ຈະບໍ່ຂັດກັບການນຳໃຊ້ ເພື່ອສະແຫວງຫາຜົນປະໂຫຍດປົກກະຕິ ແລະ ບໍ່ສ້າງຜົນເສຍຫາຍຕໍ່ຜົນປະໂຫຍດອັນຊອບທຳຂອງນັກປະພັນ ແບບບໍ່ມີເຫດຜົນ.

ບົດບັນຍັດທີ່ໄດ້ກຳນົດໄວ້ໃນ ວັກ 6 ຂອງມາດຕານີ້ ຍັງຖືກນຳໃຊ້ກັບຜົນງານການກະຈາຍສຽງ-ແຜ່ພາບ ທີ່ມີລັກສະນະດຽວກັນ ແລະ ຕ້ອງປະຕິບັດຕາມເງື່ອນໄຂດຽວກັນ, ສະເພາະແຕ່ການຜະລິດຊ້ຳ, ການກະຈາຍສຽງ-ແຜ່ພາບ ຫຼື ການສື່ສານດັ່ງກ່າວຂອງຜົນງານ ທີ່ຜູ້ຖືສິດບໍ່ໄດ້ສະຫງວນໄວ້ຢ່າງຈະແຈ້ງ.

ຜົນງານກ່ຽວກັບລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ສາມາດຜະລິດຊ້ຳ ແລະ ເຜີຍແຜ່ຕໍ່ສາທາລະນະຊົນ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກເຈົ້າຂອງສິດ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ, ຖ້າຫາກການກະທຳທີ່ສະເໜີມານັ້ນ ສອດຄ່ອງກັບທຸກເງື່ອນໄຂ ດັ່ງນີ້:

1. ເພື່ອລາຍງານເຫດການປະຈຸບັນ ດ້ວຍການຖ່າຍພາບ, ການຖ່າຍທຳຮູບເງົາ, ການກະຈາຍ ສຽງ-ແຜ່ພາບ ຫຼື ການສື່ສານຕໍ່ສາທາລະນະຊົນ ດ້ວຍລະບົບສື່ສານທີ່ໃຊ້ສາຍ;
2. ກ່ຽວຂ້ອງກັບຜົນງານດ້ານສິລະປະກຳ ຫຼື ວັນນະກຳທີ່ໄດ້ເຫັນ ແລະ ໄດ້ຍິນໃນເຫດການກຳລັງເກີດຂຶ້ນ;
3. ການຜະລິດຊ້ຳ ຫຼື ການສື່ສານຕໍ່ສາທາລະນະຊົນຂອງຜົນງານ ເພື່ອຈຸດປະສົງໃນການສະໜອງຂໍ້ມູນເທົ່ານັ້ນ;
4. ການຜະລິດຊ້ຳ ຫຼື ການສື່ສານດັ່ງກ່າວ ບໍ່ໃຫ້ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ແລະ ບໍ່ສ້າງຜົນເສຍຫາຍ ຕໍ່ຜົນປະໂຫຍດອັນຊອບທຳຂອງເຈົ້າຂອງສິດ.

### ມາດຕາ 12 ການອະນຸຍາດຈາກຜູ້ຖືສິດ

ຜູ້ຖືສິດ ສາມາດອະນຸຍາດໃຫ້ມີການເຮັດສຳເນົາ ຫຼື ການສະແຫວງຫາຜົນປະໂຫຍດອື່ນໃນລັກສະນະໃດກໍ່ໄດ້ ແລະ ຕ້ອງສອດຄ່ອງກັບເງື່ອນໄຂຂອງສັນຍາທີ່ຖືກຕ້ອງຕາມກົດໝາຍ ຊຶ່ງຄູ່ສັນຍາໄດ້ຕົກລົງກັນ.

ໃນການອະນຸຍາດ ບໍ່ຈຳເປັນຕ້ອງເຮັດເປັນແບບສະເພາະເຈາະຈົງ, ແຕ່ວ່າ ຮູບແບບ ແລະ ເງື່ອນໄຂຂອງການອະນຸຍາດ ຄວນແທດເໝາະກັບສະພາບການນຳໃຊ້ຕົວຈິງ. ໃນເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ ກ່ຽວກັບ

ການລະເມີດສັນຍາ, ຝ່າຍທີ່ອ້າງວ່າໄດ້ຮັບອະນຸຍາດ ໃຫ້ສະແຫວງຫາຜົນປະໂຫຍດ ຕ້ອງຮັບຜິດຊອບນຳເອົາຫຼັກຖານກ່ຽວກັບການອະນຸຍາດດັ່ງກ່າວນັ້ນມາຢັ້ງຢືນ, ແຕ່ຜູ້ຖືສິດ ຕ້ອງຮັບຜິດຊອບໃນການປະກອບຫຼັກຖານ ເພື່ອປະຕິເສດການອະນຸຍາດດັ່ງກ່າວ. ສະນັ້ນ, ເພື່ອຫຼີກເວັ້ນຂໍ້ຂັດແຍ່ງ ຄູ່ສັນຍາຕ້ອງເລືອກຮູບແບບການຕົກລົງອະນຸຍາດໃຫ້ສະແຫວງຫາຜົນປະໂຫຍດແບບສະເພາະເຈາະຈົງ ແລະ ເປັນລາຍລັກອັກສອນ.

ເຖິງວ່າ ການຕົກລົງເປັນລາຍລັກອັກສອນແບບສະເພາະເຈາະຈົງ ຈະເປັນການຕົກລົງທີ່ດີກວ່າ, ແຕ່ຄວນຮັບຮູ້ວ່າ ການຕົກລົງດັ່ງກ່າວ ບໍ່ສາມາດຮັບປະກັນໄດ້ວ່າ ຈະບໍ່ມີຂໍ້ຂັດແຍ່ງເກີດຂຶ້ນສະເໝີໄປ. ໃນກໍລະນີຂໍ້ຂັດແຍ່ງທີ່ເກີດຂຶ້ນ ທີ່ບໍ່ມີການອະນຸຍາດເປັນລາຍລັກອັກສອນແບບລະອຽດ ລະຫວ່າງຄູ່ຮ່ວມສັນຍາ, ໃຫ້ນຳໃຊ້ຂໍ້ສັນນິຖານທີ່ສາມາດໂຕ້ແຍ້ງໄດ້ດັ່ງຕໍ່ໄປນີ້, ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນ:

1. ການອະນຸຍາດທັງໝົດ ໃຫ້ສັນນິຖານວ່າ ເປັນການອະນຸຍາດສະເພາະແຕ່ການສະແຫວງຫາຜົນປະໂຫຍດຢູ່ໃນຂອບເຂດທີ່ລະບຸໄວ້ໃນສັນຍາເທົ່ານັ້ນ, ຖ້າຫາກມີການສະແຫວງຫາຜົນປະໂຫຍດເພີ່ມເຕີມ ຈະຕ້ອງໄດ້ມີການຂໍອະນຸຍາດເພີ່ມ;
2. ການອະນຸຍາດທັງໝົດ ໃຫ້ສັນນິຖານວ່າ ບຸກຄົນທີ່ໄດ້ຮັບອະນຸຍາດ ບໍ່ມີສິດທີ່ຈະອະນຸຍາດຕໍ່ໃຫ້ບຸກຄົນອື່ນ ສະແຫວງຫາຜົນປະໂຫຍດຈາກການອະນຸຍາດນັ້ນ;
3. ການອະນຸຍາດ ທີ່ບໍ່ແມ່ນການດຳເນີນທຸລະກິດປົກກະຕິ ຈະຖືວ່າ ບໍ່ເປັນພັນທະໃຫ້ແກ່ບຸກຄົນທີ່ໄດ້ຮັບອະນຸຍາດຕ້ອງຈ່າຍຄ່າຕອບແທນໃຫ້ແກ່ຜູ້ໃຫ້ອະນຸຍາດ, ເວັ້ນເສຍແຕ່ການສະແຫວງຫາຜົນປະໂຫຍດ ທີ່ກໍ່ໃຫ້ເກີດລາຍໄດ້. ໃນກໍລະນີທີ່ບໍ່ມີການຕົກລົງກັນ ກ່ຽວກັບເງື່ອນໄຂການຈ່າຍຄ່າຕອບແທນ ໃຫ້ສັນນິຖານວ່າ ຈະຕ້ອງມີການຈ່າຍຄ່າລິຂະສິດຢ່າງເໝາະສົມ ໃນກໍລະນີດັ່ງນີ້ :
   - 3.1 ໃນກໍລະນີມີການອະນຸຍາດ ທີ່ບໍ່ແມ່ນການດຳເນີນທຸລະກິດປົກກະຕິ ຊຶ່ງບຸກຄົນທີ່ໄດ້ຮັບອະນຸຍາດ ໄດ້ຂໍໃຫ້ບຸກຄົນອື່ນຖ່າຍຮູບ, ບັນທຶກສຽງ ຫຼື ສຽງ ແລະ ພາບຂອງຜົນງານ ຫຼື ການສະແດງ ຕາມການເລືອກເຟັ້ນ ແລະ ນຳໃຊ້ອຸປະກອນຂອງຕົນ, ໃນກໍລະນີດັ່ງກ່າວ ໃຫ້ສັນນິຖານວ່າ ບຸກຄົນທີໄດ້ຮັບອະນຸຍາດເປັນຜູ້ປະດິດຄິດແຕ່ງ;
   - 3.2 ໃນກໍລະນີມີການອະນຸຍາດ ທີ່ບໍ່ແມ່ນການດຳເນີນທຸລະກິດປົກກະຕິ ຊຶ່ງບຸກຄົນທີ່ໄດ້ຮັບອະນຸຍາດ ໄດ້ໃຫ້ບຸກຄົນອື່ນຖ່າຍຮູບ, ບັນທຶກສຽງ ຫຼື ສຽງ ແລະ ພາບຂອງ ຜົນງານ ຫຼື ການສະແດງ ໂດຍນຳໃຊ້ອຸປະກອນຂອງຕົນ ແລະ ບຸກຄົນທີ່ຖືກຂໍໃຫ້ ຖ່າຍຮູບ, ບັນທຶກສຽງ ຫຼື ສຽງ ແລະ ພາບປະກອບສ່ວນເຂົ້າໃນການເລືອກເຟັ້ນ, ໃຫ້ສັນນິຖານວ່າທັງສອງຄົນເປັນຜູ້ປະດິດຄິດແຕ່ງຮ່ວມ ແລະ ມີສິດໃນການສະແຫວງຫາຜົນປະໂຫຍດ ຈາກການນຳໃຊ້ຜົນງານຮູບຖ່າຍ, ການບັນທຶກສຽງ ຫຼື ສຽງ ແລະ ພາບ ຫຼື ການບັນທຶກການສະແດງ.
4. ໃນກໍລະນີມີການອະນຸຍາດ ທີ່ບໍ່ແມ່ນການດຳເນີນທຸລະກິດບາງຄັ້ງຄາວ ຊຶ່ງການສະແຫວງຫາຜົນປະໂຫຍດນັ້ນ ບໍ່ໄດ້ສ້າງລາຍຮັບ ຫຼື ຈະບໍ່ນຳໃຊ້ໃນກິດຈະກຳທີ່ສ້າງຜົນກຳໄລ, ອາດມີການອະນຸຍາດດ້ວຍປາກເປົ່າ ຫຼື ຕາມການສະແດງອອກທາງກາຍຂອງຜູ້ຖືສິດ.
5. ໃນກໍລະນີການດຳເນີນທຸລະກິດ ຫຼື ການສະແຫວງຫາຜົນປະໂຫຍດທີ່ພົວພັນກັບການສ້າງລາຍຮັບ ຈະຖືວ່າເປັນພັນທະຂອງຜູ້ທີ່ໄດ້ຮັບອະນຸຍາດໃນການຈ່າຍຄ່າຕອບແທນສຳລັບການອະນຸຍາດດັ່ງກ່າວ, ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນ ເປັນລາຍລັກອັກສອນ. ໃນກໍລະນີທີ່ບໍ່ມີການຕົກລົງເງື່ອນໄຂການຈ່າຍຄ່າຕອບແທນ ໃຫ້ສັນນິຖານວ່າ ຈະຕ້ອງມີການຈ່າຍຄ່າລິຂະສິດຢ່າງເໝາະສົມ.
6. ໃນກໍລະນີການສະແຫວງຫາຜົນປະໂຫຍດ ໃນການດຳເນີນທຸລະກິດ ທີ່ພົວພັນເຖິງການສ້າງລາຍ

ຮັບ, ໃຫ້ສັນນິຖານວ່າ ການສະແຫວງຫາຜົນປະໂຫຍດດັ່ງກ່າວ ແມ່ນບໍ່ໄດ້ຮັບອະນຸຍາດ ໃນເມື່ອ ບໍ່ມີຫຼັກຖານສະແດງເຖິງການອະນຸຍາດທີ່ເປັນລາຍລັກອັກສອນ ແລະ ການຈ່າຍຄ່າຕອບແທນ ນັ້ນ ຕ້ອງສອດຄ່ອງກັບທຳນຽມປະຕິບັດ ຂອງຂົງເຂດທຸລະກິດ.

ຜູ້ຖືສິດ ສາມາດໃຫ້ການອະນຸຍາດນຳໃຊ້ສິດແບບມີຂອບເຂດ ເພື່ອສະແຫວງຫາຜົນປະໂຫຍດ ຈາກ ຜົນງານຂອງຕົນ. ການອະນຸຍາດດັ່ງກ່າວ ສາມາດກຳນົດຂໍ້ຈຳກັດສະເພາະຂອງລັກສະນະ ຫຼື ຮູບແບບຂອງ ການສະແຫວງ ຫາຜົນປະໂຫຍດ ຫຼື ສາມາດສະຫງວນສິດ ຂອງລັກສະນະ ຫຼື ຮູບແບບ ຂອງການສະແຫວ ງຫາຜົນປະໂຫຍດ.

ຜູ້ຖືສິດ ລວມທັງອົງການຈັດຕັ້ງລິຂະສິດແບບລວມໝູ່ ສາມາດອອກການອະນຸຍາດນຳໃຊ້ສະເພາະ ສຳລັບການສະແດງຫຼືການສະແຫວງຫາຜົນປະໂຫຍດອື່ນ ຂອງທຸກ ຜົນງານ, ການສະແດງ, ການບັນທຶກ ສຽງ ຫຼື ການກະຈາຍສຽງ-ແຜ່ພາບ.

## ມາດຕາ 13 ການນຳໃຊ້ທີ່ເໝາະສົມ

ການສຳເນົາ ຫຼື ການສະແຫວງຫາຜົນປະໂຫຍດອື່ນ ທີ່ເຮັດໂດຍບໍ່ໄດ້ຮັບການອະນຸຍາດຈາກຜູ້ຖືສິດ ຖືວ່າເປັນການລະເມີດ, ເວັ້ນເສຍແຕ່ການກະທຳດັ່ງກ່າວນັ້ນ ເປັນການນຳໃຊ້ທີ່ເໝາະສົມ ໂດຍສອດຄ່ອງກັບ ເນື້ອໃນຂອງມາດຕາ 115 ແລະ 116 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ຫຼັກການກ່ຽວກັບການນຳ ໃຊ້ທີ່ເໝາະສົມ ແມ່ນຂໍ້ຍົກເວັ້ນຕໍ່ສິດດັ່ງທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຕ້ອງ ຕີຄວາມໝາຍໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍ ຊັບສິນທາງປັນຍາ. ຄຳວ່າ "ການນຳໃຊ້ທີ່ເໝາະສົມ" ແລະ "ສອດຄ່ອງກັບການປະຕິບັດທີ່ເໝາະສົມ" ແມ່ນສາມາດໃຊ້ແທນກັນໄດ້ ແລະ ບໍ່ມີເຈດຕະນາໃຫ້ມີ ຄວາມໝາຍທີ່ແຕກຕ່າງກັນ.

ເຖິງວ່າ ບົດບັນຍັດກ່ຽວກັບການນຳໃຊ້ທີ່ເໝາະສົມມີການກຳນົດຂໍ້ຍົກເວັ້ນຫຼາຍຢ່າງຈາກຫຼັກການ ລວມ ຊຶ່ງການສຳເນົາທັງໝົດ ຫຼື ການນຳໃຊ້ເພື່ອສະແຫວງຫາຜົນປະໂຫຍດອື່ນ ຕ້ອງມີການອະນຸຍາດຈາກຜູ້ ຖືສິດກໍຕາມ, ຂໍ້ຍົກເວັ້ນດັ່ງກ່າວບໍ່ແມ່ນການອະນຸຍາດແບບບໍ່ມີຂອບເຂດໃນການສຳເນົາ ຫຼື ໃຊ້ປະໂຫຍດ ຈາກ ຜົນງານ, ການສະແດງ, ການບັນທຶກສຽງແລະ ການກະຈາຍສຽງ-ແຜ່ພາບ. ໃນຄວາມເປັນຈິງແລ້ວ ຖ້າ ຫາກພົບເຫັນການເຮັດສຳເນົາ ຫຼື ການນຳໃຊ້ເພື່ອສະແຫວງຫາຜົນປະໂຫຍດນັ້ນ ບໍ່ແມ່ນການນຳໃຊ້ທີ່ເໝາະ ສົມ ຖືວ່າເປັນການລະເມີດ, ຊຶ່ງຜູ້ອ້າງສິດກ່ຽວກັບການນຳໃຊ້ທີ່ ເໝາະສົມດັ່ງກ່າວ ຈະບໍ່ສາມາດຫຼົບຫຼີກ ຄວາມຮັບຜິດຊອບທາງແພ່ງ ຫຼື ໃນການດຳເນີນຄະດີທາງອາຍາໃນບາງກໍລະນີ. ສະນັ້ນ, ບຸກຄົນທີ່ມີເຈດຕະ ນາສວຍໃຊ້ຫຼັກການຂອງການນຳໃຊ້ທີ່ເໝາະສົມ ຄວນພິຈາລະນາຢ່າງຮອບຄອບວ່າ ການເຮັດສຳເນົາ ຫຼື ການນຳໃຊ້ເພື່ອສະແຫວງຫາຜົນປະໂຫຍດທີ່ສະເໜີມານັ້ນ, ໂດຍປົກກະຕິແລ້ວ ຈຳເປັນຕ້ອງໄດ້ຂໍ ອະນຸຍາດ.

ໃນກໍລະນີທີ່ມີການອ້າງສິດໃນການນຳໃຊ້ທີ່ເໝາະສົມ ເປັນການແກ້ຂໍ້ກ່າວຫາການລະເມີດ, ບຸກຄົນ ທີ່ອ້າງສິດການນຳໃຊ້ທີ່ເໝາະສົມ ຕ້ອງມີໜ້າທີ່ຮັບຜິດຊອບປະກອບຫຼັກຖານ ເພື່ອຢັ້ງຢືນວ່າ ການກະທຳ ດັ່ງກ່າວນັ້ນ ເປັນການນຳໃຊ້ທີ່ເໝາະສົມ ແລະ ເພື່ອໃຫ້ສານປະຊາຊົນ ເຊື່ອຖືວ່າການກະທຳດັ່ງກ່າວ ແມ່ນ ສອດຄ່ອງກັບການນຳໃຊ້ທີ່ເໝາະສົມ ແລະ ບໍ່ເປັນການກະທຳທີ່ເປັນການລະເມີດ.

ການນຳໃຊ້ທີ່ເໝາະສົມ ຖືກກຳນົດບົນພື້ນຖານຂອງຂໍ້ເທັດຈິງໃນສະພາບການ, ໂດຍຄຳນຶງເຖິງທຸກ ປັດໃຈທີ່ກ່ຽວຂ້ອງ. ໃນການກຳນົດວ່າການນຳໃຊ້ທີ່ສະເໜີມານັ້ນ ເປັນການນຳໃຊ້ທີ່ເໝາະສົມ ຫຼື ບໍ່ນັ້ນ, ໃຫ້ ພິຈາລະນາສະເພາະ ຕາມປັດໄຈ ດັ່ງນີ້:

1. ຈຸດປະສົງ ແລະ ລັກສະນະ ຂອງການນຳໃຊ້ ໂດຍພິຈາລະນາວ່າ ການນຳໃຊ້ດັ່ງກ່າວນັ້ນ ແມ່ນເພື່ອຈຸດປະສົງທາງດ້ານ ທຸລະກິດ ຫຼື ການສຶກສາທີ່ບໍ່ຫວັງຜົນກຳໄລ ຫຼືບໍ່;
2. ການນຳໃຊ້ເນື້ອໃນຜົນງານໄດ້ມີການລະບຸ ແລະ ບົ່ງບອກເຖິງນັກປະພັນ ຫຼື ຜູ້ຖືສິດອື່ນຫຼືບໍ່;
3. ລັກສະນະຂອງຜົນງານທີ່ມີລິຂະສິດ ຫຼື ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບ ທີ່ໄດ້ຮັບການປົກປ້ອງ ລວມທັງຜົນງານທີ່ໄດ້ເຜີຍແຜ່ແລ້ວ ຫຼື ຍັງບໍ່ທັນໄດ້ເຜີຍແຜ່;
4. ຈຳນວນ ແລະ ຊຸດສ່ວນຂອງເນື້ອໃນທີ່ຖືກນຳໃຊ້ ຂອງທັງໝົດຜົນງານທີ່ມີລິຂະສິດ; ແລະ
5. ຜົນກະທົບຈາກການນຳໃຊ້ຕໍ່ທ່າແຮງຂອງຕະຫຼາດຫຼື ມູນຄ່າຂອງຜົນງານທີ່ມີລິຂະສິດ.

ເຖິງວ່າ ການນຳໃຊ້ເພື່ອການສຶກສາທີ່ບໍ່ຫວັງຜົນກຳໄລ ຖືວ່າເປັນການນຳໃຊ້ທີ່ເໝາະສົມກວ່າການນຳໃຊ້ໃນທາງການຄ້າ, ແຕ່ການນຳໃຊ້ໃນທາງການຄ້າ ກໍ່ອາດເປັນການນຳໃຊ້ທີ່ເໝາະສົມເຊັ່ນກັນ. ການນຳໃຊ້ພຽງສ່ວນໜ້ອຍຂອງຜົນງານອາດເປັນການນຳໃຊ້ທີ່ເໝາະສົມກວ່າການນຳໃຊ້ໂດຍການຜະລິດຊ້ຳທັງໝົດຂອງຜົນງານ ຫຼື ສ່ວນສຳຄັນຂອງຜົນງານ ແລະ ການເຮັດສຳເນົາເປັນອາຈິນ ແມ່ນບໍ່ສອດຄ່ອງກັບເງື່ອນໄຂຂອງການນຳໃຊ້ທີ່ເໝາະສົມ. ການນຳໃຊ້ທີ່ເໝາະສົມແມ່ນອະນຸຍາດໃຫ້ສະເພາະແຕ່ກໍລະນີພິເສດທີ່ບໍ່ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ຫຼື ທີ່ບໍ່ລະເມີດສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຖືສິດໂດຍບໍ່ມີເຫດຜົນ. ໃນການພິຈາລະນາ ການນຳໃຊ້ທີ່ເໝາະສົມ ຕ້ອງຄຳນຶງເຖິງປັດໄຈທັງໝົດເຖິງວ່າໃນບາງເຫດການອາດຢູ່ໃນໜຶ່ງ ຫຼື ຫຼາຍປັດໄຈ ດັ່ງນີ້:

1. ການຜະລິດຊ້ຳ ແລະ ການເຜີຍແຜ່ພຽງແຕ່ສ່ວນໜ້ອຍໜຶ່ງຂອງຜົນງານ ອາດພຽງພໍທີ່ຈະສ້າງຜົນເສຍຫາຍຕໍ່ຕະຫຼາດສຳລັບຜົນງານນັ້ນ, ຊຶ່ງການຜະລິດຊ້ຳ ແລະ ການເຜີຍແຜ່ດັ່ງກ່າວ ບໍ່ຖືວ່າເປັນການນຳໃຊ້ທີ່ເໝາະສົມ;
2. ການອ້າງຜົນງານຂອງຜູ້ອື່ນໂດຍບໍ່ບອກແຫຼ່ງທີ່ມາ ຖືວ່າບໍ່ເປັນການນຳໃຊ້ທີ່ເໝາະສົມ ເນື່ອງຈາກວ່າ ມີການລະເມີດສິດດ້ານຈາລິຍະທຳຂອງນັກປະພັນ ແລະ ສະແດງໃຫ້ເຫັນວ່າ ຜູ້ນຳໃຊ້ຜົນງານດັ່ງກ່າວ ໄດ້ກະທຳໂດຍບໍ່ໄດ້ຄຳນຶງເຖິງສິດຂອງຜູ້ຖືສິດ; ເຖິງຢ່າງໃດກໍຕາມ, ໃຫ້ເບິ່ງເພີ່ມເຕີມ ໃນ ຂໍ້ 3 ຂອງວັກນີ້;
3. ບາງຜົນງານໄດ້ເຮັດຂຶ້ນ ເພື່ອຈຸດປະສົງສະເພາະ ໂດຍມີການເຮັດສຳເນົາຜົນງານທັງໝົດ ຫຼື ບາງສ່ວນ, ຕາມປົກກະຕິແລ້ວ ການນຳໃຊ້ທີ່ເໝາະສົມ ແມ່ນຈຳກັດສຳລັບຈຸດປະສົງສະເພາະ, ແຕ່ບໍ່ຈຳເປັນຕ້ອງອ້າງເຖິງນັກປະພັນສະເໝີໄປ ຖ້າການນຳໃຊ້ນັ້ນ ຢູ່ໃນຂອບເຂດຂອງຂໍ້ຈຳກັດສະເພາະໂດຍຜູ້ຖືສິດ ແລະ ຍັງສອດຄ່ອງກັບການນຳໃຊ້ທີ່ເໝາະສົມ;
4. ໃນກໍລະນີ ທີ່ຜົນງານຍັງບໍ່ໄດ້ຖືກເຜີຍແຜ່ ບໍ່ເປັນສິ່ງກີດຂວາງໃນການພິຈາລະນາວ່າເປັນການນຳໃຊ້ທີ່ເໝາະສົມ ໂດຍອີງໃສ່ການພິຈາລະນາປັດໄຈທັງໝົດຂ້າງເທິງ, ແຕ່ຄວນຄຳນຶງເຖິງສິດທາງດ້ານຈາລິຍະທຳໃນການເປີດເຜີຍຄັ້ງທຳອິດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 101 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 14 ການກະທຳທີ່ບໍ່ແມ່ນການນຳໃຊ້ທີ່ເໝາະສົມ**

ອີງຕາມ ມາດຕາ 115 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ເຖິງວ່າ ຈະມີການວິເຄາະການນຳໃຊ້ທີ່ເໝາະສົມຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 13 ຂອງ ຂໍ້ຕົກລົງສະບັບນີ້ກໍຕາມ, ການກະທຳທີ່ບໍ່ຖືວ່າເປັນການນຳໃຊ້ທີ່ເໝາະສົມ ດັ່ງນີ້:

1. ການຜະລິດຊ້ຳດ້ວຍການສຳເນົາຜົນງານດ້ານສະຖາປັດຕະຍະກຳ, ລວມທັງການຜະລິດຊ້ຳດ້ວຍ

ການສ້າງຜົນງານດັ່ງກ່າວ.

2. ການຜະລິດຊໍ້າ ຫຼື ການສະແຫວງຫາຜົນປະໂຫຍດອື່ນໆ ດ້ວຍການຫຼີກລ້ຽງມາດຕະການນຳໃຊ້ທາງດ້ານເຕັກໂນໂລຊີທີ່ໃຊ້ປົກປ້ອງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ.
3. ການຜະລິດຊໍ້າ ຫຼື ການສະແຫວງຫາຜົນປະໂຫຍດອື່ນໆ ດ້ວຍການຖອນ ຫຼື ດັດແປງຂໍ້ມູນອີເລັກໂຕຣນິກ ກ່ຽວກັບການຄຸ້ມຄອງສິດ ໂດຍບໍ່ໄດ້ຮັບອະນຸຍາດ.
4. ການນຳໃຊ້ຜົນງານ, ລວມທັງການນຳໃຊ້ທີ່ຖືກຍົກເວັ້ນດັ່ງທີ່ໄດ້ກຳນົດສະເພາະໄວ້ໃນ ມາດຕາ 115 ແລະ 116 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຊຶ່ງການນຳໃຊ້ດັ່ງກ່າວ ຫາກຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິ ຂອງຜົນງານ ຫຼື ບໍ່ສ້າງຜົນເສຍຫາຍ ຕໍ່ຜົນປະໂຫຍດອັນຊອບທຳຂອງເຈົ້າຂອງສິດ.

**ມາດຕາ 15 ການນຳໃຊ້ທີ່ເໝາະສົມ ແລະ ການເຂົ້າເຖິງຜົນງານສຳລັບຜູ້ພິການທາງສາຍຕາ**

ໃນມາດຕາ 115 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໄດ້ກຳນົດກ່ຽວກັບການເຂົ້າເຖິງຜົນງານສຳລັບບຸກຄົນທີ່ພິການທາງສາຍຕາ ໂດຍໄດ້ກຳນົດຂໍ້ຍົກເວັ້ນພິເສດທີ່ອະນຸຍາດໃຫ້ມີການແປຜົນງານດັ່ງກ່າວເປັນຕົວໜັງສືນູນ ຫຼື ຕົວໜັງສືອື່ນສຳລັບບຸກຄົນພິການທາງສາຍຕາ. ການແປຕົວໜັງສືນູນ ຫຼື ຕົວໜັງສືອື່ນ ດັ່ງກ່າວນັ້ນ ຖືວ່າເປັນຜົນງານທີ່ສືບເນື່ອງຂອງຜົນງານເດີມ. ໃນມາດຕາ 115 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ອະນຸຍາດໃຫ້ມີການແປດັ່ງກ່າວ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກເຈົ້າຂອງສິດ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ, ການນຳໃຊ້ການແປດັ່ງກ່າວ ຕ້ອງບໍ່ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ຫຼື ບໍ່ສ້າງຜົນເສຍຫາຍຕໍ່ຜົນປະໂຫຍດອັນຊອບທຳຂອງເຈົ້າຂອງສິດ. ຂໍ້ຍົກເວັ້ນດັ່ງກ່າວນຳໃຊ້ສະເພາະການແປສະບັບຕົ້ນເປັນຕົວໜັງສືນູນ ຫຼື ຕົວໜັງສືອື່ນສຳລັບຜູ້ພິການທາງສາຍຕາ ຊຶ່ງບໍ່ກວມເອົາການຍົກເວັ້ນການສຳເນົາການແປດັ່ງກ່າວ ທີ່ໄດ້ມີການແປຜ່ານມາແລ້ວໂດຍບໍ່ໄດ້ຮັບອະນຸຍາດ.

**ມາດຕາ 16 ຜົນງານດ້ານວັນນະກຳທີ່ໄດ້ຢຸດຕິການຈັດພິມ**

ຜົນງານທີ່ໄດ້ຢຸດຕິ ການຈັດພິມເປັນບັນຫາພິເສດກ່ຽວກັບການອະນຸຍາດ. ໃນມາດຕານີ້ ໄດ້ກຳນົດການແນະນຳກ່ຽວກັບວິທີດຳເນີນການໃນກໍລະນີທີ່ຜົນງານດ້ານວັນນະກຳຫາກໄດ້ຢຸດຕິການຈັດພິມ.

ເຖິງວ່າຜົນງານໄດ້ຢຸດຕິການຈັດພິມ ຫຼື ບໍ່ມີຢູ່ ສປປ ລາວ ແລ້ວ, ແຕ່ຜົນງານດັ່ງກ່າວອາດຈະມີລິຂະສິດຢູ່. ສະນັ້ນ, ຂັ້ນຕອນທີໜຶ່ງ ຕ້ອງພິຈາລະນາວ່າຜົນງານດັ່ງກ່າວມີລິຂະສິດຢູ່ ຫຼື ບໍ່ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້. ຂັ້ນຕອນຕໍ່ໄປ, ຖ້າຫາກວ່າຜົນງານຍັງໄດ້ຮັບການປົກປ້ອງຢູ່, ໃຫ້ພິຈາລະນາວ່າ ຜົນງານທີ່ສະເໜີຂໍນຳໃຊ້ນັ້ນ ຕ້ອງມີການຂໍອະນຸຍາດ ຫຼື ບໍ່. ການອ້າງອີງຜົນງານທີ່ຢຸດຕິການຈັດພິມ ສາມາດເຮັດໄດ້ໂດຍອີງໃສ່ເງື່ອນໄຂເຊັ່ນດຽວກັນກັບການຂໍອະນຸຍາດນຳໃຊ້ຜົນງານອື່ນ, ເປັນຕົ້ນການຂໍອະນຸຍາດຈາກຜູ້ຖືສິດ ຫຼື ຕາມການຍົກເວັ້ນທີ່ໄດ້ກຳນົດໄວ້ໃນ ມາດຕາ 115 ຂອງກົດໝາຍວ່າ ດ້ວຍຊັບສິນທາງປັນຍາ, ລວມທັງຫຼັກການຂອງການນຳໃຊ້ທີ່ເໝາະສົມ, ຖ້າມີ. ນອກຈາກນີ້, ຖ້າຫາກຜູ້ຈັດພິມວາງແຜນທີ່ຈະພິມເຜີຍແຜ່ສຳເນົາເພີ່ມເຕີມ ຫຼື ພິມຄັ້ງໃໝ່ອີກ, ການອ້າງອີງໃສ່ຫຼັກການນຳໃຊ້ທີ່ເໝາະສົມແມ່ນບໍ່ສາມາດເຮັດໄດ້ຍ້ອນວ່າການຜະລິດຊໍ້າສຳເນົາດັ່ງກ່າວນັ້ນ ອາດສ້າງຜົນກະທົບຕໍ່ການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ.

ຖ້າການສະເໜີນຳໃຊ້ຜົນງານ ຫາກຕ້ອງໄດ້ຮັບອະນຸຍາດຈາກຜູ້ຖືສິດ ຕົວຢ່າງ: ສຳລັບຈຸດປະສົງ ເພື່ອສະເໜີນຳໃຊ້ການສະແຫວງຫາຜົນປະໂຫຍດທີ່ຈະເຮັດໃນລັກສະນະ ຫຼື ຮູບແບບທີ່ບໍ່ສອດຄ່ອງກັບໜຶ່ງໃນຂໍ້

ຍົກເວັ້ນ ທີ່ບໍ່ຈຳເປັນຕ້ອງມີການຂໍອະນຸຍາດຈາກຜູ້ຖືສິດ, ແມ່ນຈຳເປັນຕ້ອງຂໍອະນຸຍາດຈາກຜູ້ຖືສິດ.

ການຂໍອະນຸຍາດສຳລັບຜົນງານທີ່ໄດ້ຢຸດຕິມີການຈັດພິມ ບາງເທື່ອກໍສາມາດເຮັດໄດ້ໃນລັກສະນະດຽວກັນກັບຜົນງານທີ່ມີການຈັດພິມ. ຫຼາຍສຳນັກພິມມີສ່ວນຮ່ວມໃນການຮ່າງໃບອະນຸຍາດນຳໃຊ້ ເພື່ອອຳນວຍຄວາມສະດວກໃນການຂໍ ແລະ ອະນຸມັດ (ຫຼື ປະຕິເສດ) ການໃຫ້ອະນຸຍາດຕາມເງື່ອນໄຂທີ່ໄດ້ກຳນົດໂດຍຜູ້ຖືສິດ. ບາງລາຍການກໍ່ຈຳເປັນຕ້ອງໄດ້ມີການອະນຸຍາດເພື່ອຜະລິດຊໍ້າເຖິງແມ່ນວ່າຈຳນວນທີ່ຈະສຳເນົາຫາກເປັນພຽງບາງສ່ວນຂອງບົດຄວາມທັງໝົດເຊັ່ນ: ເສັ້ນສະແດງ, ຕາຕະລາງ, ຮູບພາບ, ກາບກອນ ແລະ ອື່ນໆ ທີ່ປະກອບເປັນສ່ວນໜຶ່ງຂອງຜົນງານທັງໝົດ. ໂດຍທົ່ວໄປແລ້ວ ຈະອະນຸຍາດບົນພື້ນຖານບຸກຄົນທີ່ຈະສຳເນົາຕ້ອງປະຕິບັດຕາມເງື່ອນໄຂໃນການອ້າງອີງເຖິງແຫຼ່ງຂໍ້ມູນຢ່າງຖືກຕ້ອງ. ການໃຫ້ ຫຼື ປະຕິເສດການອະນຸຍາດສຳລັບຜົນງານທີ່ໄດ້ຢຸດຕິການພິມຈຳໜ່າຍ ມີຜົນທາງດ້ານກົດໝາຍຄືກັນກັບການອະນຸຍາດທີ່ໄດ້ໃຫ້ ຫຼື ປະຕິເສດ ສຳລັບຜົນງານທີ່ຍັງມີການພິມຈຳໜ່າຍຢູ່. ໃນກໍລະນີທີ່ໄດ້ຮັບອະນຸຍາດ, ການຜະລິດຊໍ້າ ຫຼື ການນຳໃຊ້ອື່ນໆຄວນໄດ້ຮັບການປະຕິບັດໃຫ້ສອດຄ່ອງກັບເງື່ອນໄຂຂອງການອະນຸຍາດ.

ບຸກຄົນໃດທີ່ມີຈຸດປະສົງ ຢາກຜະລິດຊໍ້າຜົນງານທີ່ໄດ້ຢຸດຕິການຈັດພິມ ຕ້ອງຂໍອະນຸຍາດເສຍກ່ອນ. ຖ້າວ່າມີເຫດຜົນພຽງພໍ ແລະ ມີຄວາມຈຳເປັນທີ່ຈະຜະລິດຊໍ້າຜົນງານທັງໝົດ ແຕ່ບໍ່ສາມາດຊອກຫາຜູ້ຖືສິດໄດ້, ຊຶ່ງຄວາມຈິງແລ້ວ ຜົນງານດັ່ງກ່າວນັ້ນ ໄດ້ຢຸດຕິການຈັດພິມ ແລະ ໃນເມື່ອຊອກຫາຜູ້ຖືສິດບໍ່ເຫັນ ຕ້ອງຄຳນຶງເຖິງປັດໄຈໃນການກຳນົດວ່າ ການຜະລິດຊໍ້າທີ່ໄດ້ສະເໜີມານັ້ນ ເປັນການນຳໃຊ້ທີ່ເໝາະສົມ, ຖ້າວ່າການຜະລິດຊໍ້າດັ່ງກ່າວເປັນໄປຕາມເງື່ອນໄຂ ດັ່ງນີ້:

1. ຜົນງານທີ່ຢຸດຕິການຈັດພິມ ທີ່ຈະຜະລິດຊໍ້າ ມີພຽງແຕ່ບາງສ່ວນ ແລະ ບໍ່ເກີນສອງໜ້າເຈ້ຍ.
2. ຜົນງານທີ່ຈະຜະລິດຊໍ້າ ແມ່ນມີຈຳນວນໜ້ອຍ.

### ມາດຕາ 17 ການຍົກເວັ້ນຕໍ່ການລະເມີດ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

ອີງຕາມຫຼັກການລວມຢູ່ໃນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດແລ້ວ, ການເຮັດສຳເນົາ, ການສະແຫວງຫາຜົນປະໂຫຍດຂອງຜົນງານໃດໜຶ່ງ, ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບໂດຍ ບຸກຄົນທີ່ບໍ່ແມ່ນເຈົ້າຂອງສິດ ຖືວ່າເປັນການລະເມີດ, ເວັ້ນເສຍແຕ່:

1. ການເຮັດສຳເນົາ ຫຼື ການສະແຫວງຫາຜົນປະໂຫຍດອື່ນ ໂດຍໄດ້ຮັບອະນຸຍາດຈາກເຈົ້າຂອງສິດ;
2. ຜົນງານທີ່ກຳລັງຖືກສຳເນົາ ຫຼື ສະແຫວງຫາຜົນປະໂຫຍດ ທີ່ບໍ່ໄດ້ຮັບການປົກປ້ອງເປັນລິຂະສິດ;
3. ຜົນງານທີ່ກຳລັງຖືກສຳເນົາ ຫຼື ສະແຫວງຫາຜົນປະໂຫຍດທີ່ບໍ່ເຄີຍໄດ້ຮັບການປົກປ້ອງ ຫຼື ໄດ້ຮັບການປົກປ້ອງແລ້ວ ແຕ່ວ່າ ໄລຍະເວລາຂອງການປົກປ້ອງດັ່ງກ່າວແມ່ນໝົດອາຍຸ; ຫຼື
4. ຜົນງານທີ່ກຳລັງຖືກສຳເນົາ ແມ່ນໄດ້ຮັບການຍົກເວັ້ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

## ໝວດທີ IV
## ການໂອນສິດ ແລະ ການອະນຸຍາດນຳໃຊ້ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

### ມາດຕາ 18 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ

ເຈົ້າຂອງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ສາມາດໂອນສິດຂອງຕົນທັງໝົດ ຫຼື ບາງສ່ວນ ດ້ວຍການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ.

ໃນກໍລະນີ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ທີ່ໄດ້ແຈ້ງຂໍ້ມູນໄວ້ນຳກົມຊັບສິນທາງປັນຍາແລ້ວ, ຫາກມີການໂອນສິດ ຜູ້ໂອນສິດ ຫຼື ຜູ້ຮັບໂອນສິດ ຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາຊາບ ເພື່ອບັນທຶກການໂອນສິດດັ່ງກ່າວ. ຖ້າຜູ້ທີ່ໄດ້ຮັບໂອນສິດເປັນຜູ້ແຈ້ງການໂອນສິດ, ຜູ້ກ່ຽວຕ້ອງສະໜອງສຳເນົາເອກະສານດັ່ງກ່າວ ກ່ຽວກັບການໂອນໃຫ້ຜູ້ໂອນສິດ.

ໃນກໍລະນີທີ່ມີການໂອນກຳມະສິດຂອງນິຕິບຸກຄົນ, ສິດຕໍ່ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕ້ອງໃຫ້ເປັນຕາມການກຳນົດໃນເອກະສານຂອງການໂອນສິດດັ່ງກ່າວ. ໃນກໍລະນີທີ່ບໍ່ໄດ້ກຳນົດໄວ້ເປັນຢ່າງອື່ນ, ການໂອນກຳມະສິດຂອງນິຕິບຸກຄົນ ໃຫ້ສັນນິຖານວ່າ ແມ່ນລວມເອົາການໂອນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຂອງນິຕິບຸກຄົນດັ່ງກ່າວນັ້ນ.

ໃນກໍລະນີ ຕ້ອງການຄວາມກະຈ່າງແຈ້ງ ຫຼື ມີຄວາມສົງໄສ ກົມຊັບສິນທາງປັນຍາ ສາມາດຮຽກໃຫ້ບຸກຄົນທີ່ແຈ້ງເພື່ອບັນທຶກການໂອນສິດ ຍື່ນຂໍ້ມູນ ຫຼື ເອກະສານເພີ່ມເຕີມ.

ການໂອນສິດ ຈະບໍ່ມີຜົນສັກສິດຕໍ່ຄູ່ກໍລະນີ ຈົນກວ່າຈະມີການບັນທຶກການໂອນສິດ, ເວັ້ນເສຍແຕ່ພວກກ່ຽວຈະມີໜັງສືກ່ຽວກັບການໂອນສິດດັ່ງກ່າວມາກ່ອນແລ້ວ.

### ມາດຕາ 19 ການອະນຸຍາດນຳໃຊ້

ການຕົກລົງກ່ຽວກັບການອະນຸຍາດນຳໃຊ້ ສາມາດບັນທຶກການແຈ້ງຂໍ້ມູນໄດ້ ໂດຍປະຕິບັດຕາມຂັ້ນຕອນເຊັ່ນດຽວກັນກັບ ມາດຕາ 18 ຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີທີ່ມີຫຼາຍຄົນຖືສິດຕໍ່ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດຮ່ວມກັນ, ການອະນຸຍາດນຳໃຊ້ສິດແບບຜູກຂາດ ຕ້ອງໄດ້ຮັບການເຫັນດີ ຈາກຜູ້ຖືສິດຮ່ວມທັງໝົດ, ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນຢູ່ໃນສັນຍາ. ຜູ້ຖືສິດຮ່ວມໃດໜຶ່ງ ສາມາດອະນຸຍາດໃຫ້ນຳໃຊ້ສິດແບບບໍ່ຜູກຂາດໃຫ້ບຸກຄົນໃດກໍ່ໄດ້.

ການຂາຍລາຍການໃດໜຶ່ງ ທີ່ປະກອບຢູ່ໃນຜົນງານການປະພັນ, ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບ ຕ້ອງຖືວ່າ ເປັນການອະນຸຍາດໃຫ້ຜູ້ຊື້ ແລະ ບຸກຄົນອື່ນທີ່ເຮັດໜ້າທີ່ແທນຜູ້ຊື້ ນຳໃຊ້ລາຍການດັ່ງກ່າວຂອງຜົນງານການປະພັນ, ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບ ສຳລັບຈຸດປະສົງທົ່ວໄປ, ແຕ່ບໍ່ໃຫ້ສິດແກ່ຜູ້ຊື້ເຮັດສຳເນົາ ຫຼື ສະແຫວງຫາຜົນປະໂຫຍດຂອງຜົນງານການປະພັນ, ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບ, ເວັ້ນເສຍແຕ່ເຈົ້າຂອງສິດໄດ້ຕົກລົງເປັນລາຍລັກອັກສອນ.

ການກຳນົດໄວ້ໃນວັກ 2 ຂອງມາດຕານີ້ ຈະນຳມາປະຕິບັດເຊັ່ນດຽວກັນກັບ ການເຊົ່າ, ການເຊົ່າຊື້, ການໃຫ້ເປັນຂອງຂວັນ ຫຼື ດ້ວຍວິທີການອື່ນ ກ່ຽວກັບລາຍການໃດໜຶ່ງຂອງຜົນງານ ການປະພັນ, ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບ. ໃນກໍລະນີການດຳເນີນການດັ່ງກ່າວຫາກມີການກຳນົດເວລາ ຫຼື ຂອບເຂດການນຳໃຊ້, ການອະນຸຍາດນຳໃຊ້ນັ້ນ ກໍ່ຈະມີກຳນົດເວລາ ແລະ ຂອບເຂດການນຳໃຊ້ດຽວກັນ.

ໃນກໍລະນີ ການໂອນສິດເປັນການ ໃຫ້ຂອງຂວັນ ຫຼື ຂາຍໃນມູນຄ່າທີ່ຕ່ຳກວ່າລາຄາຕະຫຼາດ ຜູ້ຊື້ຕ້ອງມີເຫດຜົນມາຢັ້ງຢືນໃຫ້ເຈົ້າຂອງສິດເຫັນດີຕໍ່ກັບການດຳເນີນການດັ່ງກ່າວ.

ໃນກໍລະນີການໂອນກຳມະສິດຂອງນິຕິບຸກຄົນ, ຊຶ່ງຜູ້ໄດ້ຮັບການອະນຸຍາດນຳໃຊ້ໜຶ່ງ ຫຼື ຫຼາຍຜົນງານທີ່ມີລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ຈະຕ້ອງຖືວ່າ ການອະນຸຍາດນຳໃຊ້ ໄດ້ຖືກໂອນພ້ອມກັບການໂອນກຳມະສິດຂອງນິຕິບຸກຄົນນັ້ນ, ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນຢູ່ໃນສັນຍາການອະນຸຍາດນຳໃຊ້ ຫຼື ໃນເອກະສານ ທີ່ໄດ້ກຳນົດການໂອນກຳມະສິດຂອງນິຕິບຸກຄົນນັ້ນ. ການໂອນກຳມະສິດຂອງນິຕິບຸກຄົນ

ຈະບໍ່ມີຜົນຕໍ່ການເປັນໂມຄະ ຂອງສັນຍາການອະນຸຍາດນໍາໃຊ້, ຊຶ່ງນິຕິບຸກຄົນນັ້ນ ກໍ່ແມ່ນຜູ້ມອບການອະນຸຍາດນໍາໃຊ້, ນອກຈາກວ່າ ຈະໄດ້ກໍານົດໄວ້ເປັນຢ່າງອື່ນໃນສັນຍາການອະນຸຍາດນໍາໃຊ້.

## ໝວດທີ V
## ການເປັນຜູ້ຕາງໜ້າໃຫ້ເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃນການແຈ້ງຂໍ້ມູນ ແລະ ດໍາເນີນການອື່ນໆ

### ມາດຕາ 20 ບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ

ອີງຕາມການກໍານົດໄວ້ໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້, ບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ມີດັ່ງນີ້:

1. ຜູ້ຮ້ອງຂໍ;
2. ຜູ້ຕາງໜ້າໃນກໍລະນີ ຄໍາຮ້ອງ ທີ່ມີຜູ້ຍື່ນຮ່ວມກັນຫຼາຍຄົນ;
3. ທະນາຍຄວາມທີ່ໄດ້ຮັບອະນຸຍາດ ໃຫ້ດໍາເນີນການທາງດ້ານກົດໝາຍໃນ ສປປ ລາວ;
4. ຜູ້ປະກອບການທາງດ້ານຊັບສິນທາງປັນຍາ; ຫຼື
5. ເຈົ້າຂອງ ຫຼື ພະນັກງານຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງ;
6. ຜູ້ຕາງໜ້າ ທີ່ຜູ້ຮ້ອງຂໍ ວ່າຈ້າງ.

ອີງຕາມການກໍານົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້, ບຸກຄົນໃດໜຶ່ງ ສາມາດດໍາເນີນການດ້ວຍຕົນເອງ ຫຼື ອາດແຕ່ງຕັ້ງຜູ້ຕາງໜ້າ ເພື່ອດໍາເນີນການອື່ນກັບກົມຊັບສິນທາງປັນຍາ ທີ່ກ່ຽວຂ້ອງກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຫຼື ອີງການຈັດຕັ້ງລິຂະສິດແບບລວມໝູ່.

### ມາດຕາ 21 ການແຕ່ງຕັ້ງຜູ້ຕາງໜ້າ

ຜູ້ຕາງໜ້າ ທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສັນທະ, ຊຶ່ງໃບມອບສັນທະຕ້ອງມີລາຍເຊັນຂອງຜູ້ຮ້ອງຂໍ ຫຼື ຜູ້ມອບອໍານາດ. ໃນກໍລະນີຄໍາຮ້ອງຫາກຍື່ນຮ່ວມກັນໂດຍ ນັກປະພັນ, ນັກສະແດງ, ຜູ້ຜະລິດການບັນທຶກສຽງ ຫຼື ຜູ້ກະຈາຍສຽງ-ແຜ່ພາບ ຫຼາຍຄົນ, ຕາມປົກກະຕິແລ້ວ ໃບມອບສັນທະ ຕ້ອງມີລາຍເຊັນຂອງໝົດທຸກຄົນ, ເວັ້ນເສຍແຕ່ມີບຸກຄົນໃດໜຶ່ງ ຫາກເສຍຊີວິດ ຫຼື ບໍ່ສາມາດເຂົ້າຮ່ວມ ຫຼື ປະຕິເສດບໍ່ເຂົ້າຮ່ວມການຍື່ນຄໍາຮ້ອງນັ້ນ. ບໍ່ວ່າຈະຢູ່ໃນກໍລະນີໃດກໍຕາມ, ຂໍ້ມູນດັ່ງກ່າວ ຕ້ອງໄດ້ລະບຸໄວ້ໃນເອກະສານຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ອີງຕາມ ມາດຕາ 22 ຂອງຂໍ້ຕົກລົງສະບັບນີ້ ແລະ ການກໍານົດອື່ນໃນໝວດນີ້, ໃບມອບສັນທະສາມາດແຕ່ງຕັ້ງຜູ້ຕາງໜ້າໄດ້ຫຼາຍກວ່າໜຶ່ງຄົນ ໂດຍຜູ້ຕາງໜ້າທັງໝົດດັ່ງກ່າວ ມີທີ່ຢູ່ບ່ອນດຽວກັນ.

### ມາດຕາ 22 ການມອບສັນທະ

ການມອບສັນທະ ແມ່ນ ເຈົ້າຂອງສິດໄດ້ມອບອໍານາດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນ.

ໃບມອບສັນທະຕ້ອງກໍານົດລັກສະນະສະເພາະ ແລະ ຂອບເຂດຂອງການເປັນຜູ້ຕາງໜ້າ. ໃບມອບສັນທະຕ້ອງກໍານົດໃຫ້ຜູ້ຕາງໜ້າ ມີສິດອໍານາດດໍາເນີນການໜຶ່ງ ຫຼື ຫຼາຍບັນຫາ ທີ່ກ່ຽວຂ້ອງກັບວຽກງານຊັບສິນທາງປັນຍາ ຕໍ່ກົມຊັບສິນທາງປັນຍາ, ຊຶ່ງລວມທັງຜົນງານ ການປະພັນ, ການສະແດງ, ການບັນທຶກສຽງ

ຫຼື ການກະຈາຍສຽງ-ແຜ່ພາບ ທີ່ມີຂອງຜູ້ມອບອຳນາດນັ້ນ ແລະ ຕ້ອງລະບຸຂໍ້ຍົກເວັ້ນໃນການແຕ່ງຕັ້ງບຸກຄົນດັ່ງກ່າວ. ໃບມອບສັນທະ ສາມາດກຳນົດ ຫຼື ບໍ່ກຳນົດໄລຍະເວລາກໍໄດ້. ໃບມອບສັນທະອາດຖືກຍົກເລີກຈາກຜູ້ມອບອຳນາດໄດ້ທຸກເວລາ ໂດຍບໍ່ກະທົບຕໍ່ສິດຂອງຜູ້ຕາງໜ້າ ໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆ ທີ່ເກີດຂຶ້ນໃນລະຫວ່າງການຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ໄດ້ລະບຸໄວ້ໃນໃບມອບສັນທະ, ຍົກເວັ້ນແຕ່ໃນກໍລະນີທີ່ເງື່ອນໄຂຂອງໃບມອບສັນທະ ຫາກຂັດກັບກົດໝາຍ ຫຼື ລະບຽບການ.

ໃນກໍລະນີທີ່ໃບມອບສັນທະ ຫາກບໍ່ໄດ້ກຳນົດຂອບເຂດ ຫຼື ໄລຍະເວລາຂອງການເປັນຜູ້ຕາງໜ້າ, ກົມຊັບສິນທາງປັນຍາຈະພິຈາລະນາໃບມອບສັນທະດັ່ງກ່າວ ນຳໃຊ້ສະເພາະຄຳຮ້ອງດຽວເທົ່ານັ້ນ; ຫຼື ການດຳເນີນການອື່ນທີ່ກ່ຽວຂ້ອງກັບໃບມອບສັນທະ ທີ່ໄດ້ສົ່ງໃນເບື້ອງຕົ້ນ ແລະ ກຳນົດເວລາຂອງໃບມອບສັນທະ ຈະຖືວ່າສິ້ນສຸດລົງເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງດັ່ງກ່າວ ຫຼື ການດຳເນີນການອື່ນຫາກໄດ້ສຳເລັດແລ້ວ.

ໃນກໍລະນີບໍ່ມີຫຼັກຖານມາໂຕ້ແຍ້ງ, ໃຫ້ຖືວ່າ ຜູ້ຕາງໜ້າປະຕິບັດຕາມການແນະນຳ ຫຼື ເຈດຈຳນົງຂອງຜູ້ມອບອຳນາດ.

**ມາດຕາ 23 ເງື່ອນໄຂຂອງການມອບສັນທະທີ່ມີຜົນບັງຄັບໃຊ້**

ການມອບສັນທະ ຕ້ອງເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ມອບອຳນາດ. ໃນກໍລະນີມີນັກປະພັນຮ່ວມຫຼາຍຄົນ ໃບມອບສັນທະ ຕ້ອງມີລາຍເຊັນຂອງນັກປະພັນຮ່ວມທຸກຄົນ, ກໍລະນີບໍ່ມີລາຍເຊັນຄົບຕາມຈຳນວນ ໃຫ້ແຈ້ງເຫດຜົນກ່ຽວກັບການບໍ່ລົງລາຍເຊັນ.

ໃນກໍລະນີທີ່ຜູ້ອອກໃບມອບສັນທະ ເປັນນິຕິບຸກຄົນ ຫຼື ການຈັດຕັ້ງ, ໃບມອບສັນທະ ຕ້ອງໄດ້ລົງລາຍເຊັນໂດຍຜູ້ມີສິດອຳນາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ.

**ມາດຕາ 24 ການສິ້ນສຸດການເປັນຜູ້ຕາງໜ້າ**

ການເປັນຜູ້ຕາງໜ້າຈະສິ້ນສຸດລົງ ເມື່ອການມອບສັນທະ ຖືກຍົກເລີກໂດຍຜູ້ມອບອຳນາດ ຫຼື ຜູ້ຕາງໜ້າ ຖອນຕົວ.

ໃນກໍລະນີ ຜູ້ຕາງໜ້າໄດ້ຖອນຕົວ ຕ້ອງແຈ້ງໃຫ້ຜູ້ມອບອຳນາດ ແລະ ກົມຊັບສິນທາງປັນຍາ ຮັບຊາບ.

**ມາດຕາ 25 ການອະນຸຍາດໃຫ້ເປັນຜູ້ຕາງໜ້າ ດຳເນີນການຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ**

ບຸກຄົນທີ່ມີຄວາມເໝາະສົມ, ມີຄວາມຮູ້ດ້ານຊັບສິນທາງປັນຍາ ແລະ ມີຄຸນວຸດທິການສຶກສາ ແລະ ມີທີ່ຢູ່ໃນ ສປປ ລາວ ມີຈຸດປະສົງ ດຳເນີນການເປັນ ຕົວແທນ ຫຼື ຜູ້ຕາງໜ້າ ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ແລະ ຕ້ອງໄດ້ຮັບອະນຸຍາດຈາກກົມຊັບສິນທາງປັນຍາ. ສຳລັບເງື່ອນໄຂທີ່ຈະໄດ້ຮັບອະນຸຍາດໃຫ້ເປັນຜູ້ຕາງໜ້າ ແມ່ນກຳນົດໄວ້ໃນລະບຽບການຕ່າງຫາກ.

# ໝວດທີ VI
# ອົງການຈັດຕັ້ງລິຂະສິດແບບລວມໝູ່

**ມາດຕາ 26 ການສ້າງຕັ້ງອົງການຈັດຕັ້ງລິຂະສິດແບບລວມໝູ່**

ອົງການຈັດຕັ້ງລິຂະສິດແບບລວມໝູ່ ແມ່ນການຈັດຕັ້ງທີ່ສ້າງຂຶ້ນ ພາຍໃຕ້ການຄຸ້ມຄອງຂອງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອເຮັດໜ້າທີ່ໃນການຄຸ້ມຄອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໂດຍອີງຕາມ ມາດຕາ 118, 119 ແລະ 120 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 27 ການຈົດທະບຽນ ເປັນອົງການຈັດຕັ້ງລິຂະສິດແບບລວມໝູ່**

ການຈັດຕັ້ງໃດໜຶ່ງ ມີຈຸດປະສົງຢາກດຳເນີນການສ້າງຕັ້ງ ອົງການຈັດຕັ້ງລິຂະສິດແບບລວມໝູ່ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນຕໍ່ກົມຊັບສິນທາງປັນຍາ.

ການຈົດທະບຽນເປັນອົງການຈັດຕັ້ງລິຂະສິດແບບລວມໝູ່ ຕ້ອງຍື່ນຄຳຮ້ອງພ້ອມດ້ວຍເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ.

**ມາດຕາ 28 ສິດ ແລະ ພັນທະ ຂອງ ອົງການຈັດຕັ້ງລິຂະສິດແບບລວມໝູ່**

ອົງການຈັດຕັ້ງລິຂະສິດແບບລວມໝູ່ ທີ່ໄດ້ຈົດທະບຽນຢູ່ນຳກົມຊັບສິນທາງປັນຍາ ມີສິດຕາງໜ້າໃຫ້ຜູ້ໄດ້ຮັບຜົນປະໂຫຍດໃນການເຈລະຈາ ແລະ ຂໍນຳໃຊ້ມາດຕະການທາງກົດໝາຍ ຈາກສານປະຊາຊົນ ຫຼື ອົງການກ່ຽວຂ້ອງກັບການບັງຄັບໃຊ້ກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງລະຫວ່າງອົງການຈັດຕັ້ງລິຂະສິດແບບລວມໝູ່ ແລະ ຜູ້ໄດ້ຮັບຜົນປະໂຫຍດ.

ອົງການຈັດຕັ້ງລິຂະສິດແບບລວມໝູ່ ມີຄວາມຮັບຜິດຊອບ ຕໍ່ກັບການດຳເນີນການຂອງຕົນໃນນາມຜູ້ທີ່ໄດ້ຮັບມອບໝາຍຕາງໜ້າໃຫ້ຜູ້ໄດ້ຮັບຜົນປະໂຫຍດ.

**ມາດຕາ 29 ການຕິດຕາມການເຄື່ອນໄຫວຂອງອົງການຈັດຕັ້ງລິຂະສິດແບບລວມໝູ່**

ກົມຊັບສິນທາງປັນຍາ ຕ້ອງດຳເນີນການຕິດຕາມກວດກາອົງການຈັດຕັ້ງລິຂະສິດແບບລວມໝູ່ ເພື່ອປ້ອງກັນການສໍ້ໂກງ ແລະ ການປະລະໜ້າທີ່. ອົງການຈັດຕັ້ງ ລິຂະສິດແບບລວມໝູ່ຕ້ອງໃຫ້ການຮ່ວມມືຕໍ່ການຕິດຕາມກວດກາຂອງກົມຊັບສິນທາງປັນຍາ.

ສຳລັບການຄຸ້ມຄອງ ແລະ ຕິດຕາມກວດກາ ການເຄື່ອນໄຫວຂອງອົງການຈັດຕັ້ງລິຂະສິດແບບລວມໝູ່ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 30 ການສົ່ງເສີມ ແລະ ສະໜັບສະໜູນອົງການຈັດຕັ້ງລິຂະສິດແບບລວມໝູ່**

ກົມຊັບສິນທາງປັນຍາ ຕ້ອງໃຫ້ການສົ່ງເສີມ ແລະ ສະໜັບສະໜູນອົງການຈັດຕັ້ງລິຂະສິດແບບລວມໝູ່ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ. ການສົ່ງເສີມ ແລະ ສະໜັບສະໜູນດັ່ງກ່າວ ອາດລວມເອົາ ການໃຫ້ຄຳແນະນຳທາງດ້ານກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ການປະຕິບັດທີ່ດີຂອງສາກົນ ໂດຍນຳໃຊ້ເອກະສານ, ການປຶກສາຫາລື ແລະ ກອງປະຊຸມສຳມະນາ. ຈຸດປະສົງຂອງການສົ່ງເສີມ ແລະ ການສະໜັບສະໜູນດັ່ງກ່າວ ກໍ່ເພື່ອກະຕຸກຊຸກຍູ້ໃຫ້ມີການດຳເນີນງານທີ່ມີປະສິດທິພາບ ແລະ ປະສິດທິຜົນ ແລະ ປ້ອງ

ກັບການລະເມີດ ຫຼື ໃນກໍລະນີເຫັນວ່າ ມີການລະເມີດເກີດຂຶ້ນ ຈະຕ້ອງມີການແກ້ໄຂຢ່າງຮີບດ່ວນ ແລະ ນໍາໃຊ້ມາດຕະການອື່ນໆ ເພື່ອປ້ອງກັນບໍ່ໃຫ້ມີການລະເມີດເກີດຂຶ້ນອີກ.

ກົມຊັບສິນທາງປັນຍາຕ້ອງເຜີຍແຜ່ແຈ້ງການ ທີ່ກໍານົດນະໂຍບາຍ, ລະບຽບການ ແລະ ຄໍາແນະນໍາຂອງຕົນຕໍ່ກັບບັນຫາທີ່ກ່ຽວຂ້ອງກັບການສ້າງຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງລິຂະສິດແບບລວມໝູ່ ເປັນແຕ່ລະໄລຍະ. ກົມຊັບສິນທາງປັນຍາ ຕ້ອງສ້າງ ແລະ ຮັກສາ ບັນຊີລາຍຊື່ ອົງການຈັດຕັ້ງລິຂະສິດແບບລວມໝູ່ ທີ່ໄດ້ຈົດທະບຽນນໍາກົມ ແລະ ເຜີຍແຜ່ບັນຊີລາຍຊື່ດັ່ງກ່າວເປັນແຕ່ລະໄລຍະ.

### ມາດຕາ 31 ສິດໃນການສະເໜີຂໍພິຈາລະນາຄືນໃໝ່

ອົງການຈັດຕັ້ງລິຂະສິດແບບລວມໝູ່ ມີສິດສະເໜີຕໍ່ກົມ ທີ່ເຫັນວ່າ ກົມຊັບສິນທາງປັນຍາໄດ້ອອກລະບຽບການ ທີ່ບໍ່ເໝາະສົມ ກໍ່ສາມາດສະເໜີຂໍໃຫ້ກົມພິຈາລະນາຄືນໃໝ່, ຕາມທີ່ໄດ້ກໍານົດໃນຂໍ້ຕົກລົງສະບັບນີ້.

## ໝວດທີ VII
## ການທົບທວນຄືນທາງດ້ານບໍລິຫານ ກ່ຽວກັບ ການແຈ້ງ ຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ການອະນຸຍາດສ້າງຕັ້ງອົງການຈັດຕັ້ງລິຂະສິດແບບລວມໝູ່

### ມາດຕາ 32. ການປ້ອງກັນ ແລະ ການແກ້ໄຂ ຂໍ້ຜິດພາດ

ກົມຊັບສິນທາງປັນຍາ ມີສິດໃນການທົບທວນຄືນ ກ່ຽວກັບ ການແຈ້ງ ຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ການອະນຸຍາດສ້າງຕັ້ງອົງການລິຂະສິດແບບລວມໝູ່ ເພື່ອດໍາເນີນການທາງດ້ານບໍລິຫານຕາມຄວາມຈໍາເປັນ ເພື່ອປ້ອງກັນ ແລະ ແກ້ໄຂ ຂໍ້ຜິດພາດ.

ການອຸທອນ ແລະ ການດໍາເນີນການ ທີ່ໄດ້ກໍານົດໄວ້ໃນໝວດນີ້ ແມ່ນມີຄວາມຈໍາເປັນ ແລະ ເໝາະສົມຕາມຂັ້ນຕອນຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ການອຸທອນ ແມ່ນການສະເໜີເພື່ອພິຈາລະນາຄືນໃໝ່ ແລະ ການດໍາເນີນການອື່ນ ທີ່ໄດ້ກໍານົດໄວ້ໃນໝວດນີ້ ຕ້ອງປະຕິບັດຕາມຂັ້ນຕອນທີ່ໄດ້ກໍານົດໄວ້ຢູ່ໃນຂໍ້ຕົກລົງສະບັບນີ້. ການສະເໜີໄປຕາມຂັ້ນຕອນດັ່ງກ່າວ ແມ່ນສ່ວນໜຶ່ງຂອງຂັ້ນຕອນດ້ານບໍລິຫານຂອງກົມຊັບສິນທາງປັນຍາ ແລະ ບໍ່ລະເມີດສິດໃດໆທີ່ອາດເກີດຈາກກົດໝາຍ ວ່າດ້ວຍການການດໍາເນີນຄະດີທາງແພ່ງ.

### ມາດຕາ 33 ການທົບທວນຄືນດ້ານບໍລິຫານ

ອົງການຈັດຕັ້ງລິຂະສິດແບບລວມໝູ່ ຫຼື ບຸກຄົນ ທີ່ດໍາເນີນການກັບກົມຊັບສິນທາງປັນຍາ ກ່ຽວກັບການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ການອະນຸຍາດສ້າງຕັ້ງອົງການລິຂະສິດແບບລວມໝູ່ ທີ່ເຫັນວ່າ ກົມ ບໍ່ໄດ້ປະຕິບັດຕາມ ເງື່ອນໄຂ ຫຼື ການກໍານົດ ຂອງລະບຽບການ ກ່ຽວກັບວຽກງານດັ່ງກ່າວ, ສາມາດສະເໜີຂໍໃຫ້ກົມທົບທວນຄືນໄດ້ພາຍໃນເວລາ 90 ວັນ ພາຍຫຼັງໄດ້ຮັບແຈ້ງການກ່ຽວກັບການກໍານົດເງື່ອນໄຂ ຫຼື ການຕົກລົງດັ່ງກ່າວ, ໂດຍປະຕິບັດຕາມຂັ້ນຕອນໃດໜຶ່ງ ດັ່ງນີ້:

1. ສະເໜີ ເພື່ອໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການກໍານົດເງື່ອນໄຂ ຫຼື ການຕົກລົງ ເປັນລາຍລັກອັກສອນ, ໂດຍບໍ່ຈ່າຍຄ່າທໍານຽມ ຫຼື ຄ່າບໍລິການ; ຫຼື
2. ສະເໜີ ການອຸທອນເປັນລາຍລັກອັກສອນ ໂດຍຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ທີ່ກ່ຽວຂ້ອງ.

ຂໍ້ສະເໜີດັ່ງກ່າວຕ້ອງລະບຸຂໍ້ມູນ ດັ່ງນີ້:

1. ເງື່ອນໄຂ ຫຼື ການຕົກລົງ ທີ່ຕ້ອງການໃຫ້ທົບທວນຄືນ;
2. ຂໍ້ເທັດຈິງ ແລະ ພື້ນຖານທາງດ້ານກົດໝາຍ, ແລະ
3. ມາດຕະການທີ່ສະເໜີໂດຍຜູ້ຮ້ອງຂໍ ເພື່ອໃຫ້ກົມພິຈາລະນາ.

ການສະເໜີ ຍັງອາດຈະລວມເອົາ ຄຳໂຕ້ແຍ້ງ ຫຼື ການອະທິບາຍ, ຊຶ່ງຜູ້ສະເໜີເຫັນວ່າ ຈະເປັນການສະໜັບສະໜູນ ໃຫ້ແກ່ການພິຈາລະນາຄືນໃໝ່ ຫຼື ການອຸທອນ.

**ມາດຕາ 34 ການສະເໜີໃຫ້ຢຸດຊົ່ວຄາວ**

ການສະເໜີໃຫ້ທົບທວນຄືນທາງດ້ານບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 33 ຂອງຂໍ້ຕົກລົງສະບັບນີ້ ອາດລວມເຖິງການສະເໜີໃຫ້ຢຸດຊົ່ວຄາວ ໃນການປະຕິບັດ ເງື່ອນໄຂ ຫຼື ການຕົກລົງ ຂອງກົມຊັບສິນທາງປັນຍາ, ທີ່ຜູ້ຮ້ອງຂໍສະເໜີໃຫ້ມີການພິຈາລະນາຄືນໃໝ່ ຫຼື ການອຸທອນ. ບໍ່ດັ່ງນັ້ນ, ເງື່ອນໄຂ ຫຼື ການຕົກລົງດັ່ງກ່າວ ກໍຍັງມີຜົນສັກສິດຈົນກວ່າກົມ ຈະຍົກເລີກ ເງື່ອນໄຂ ຫຼື ການຕົກລົງ ດັ່ງກ່າວ. ອີກຢ່າງໜຶ່ງ ການຢຸດຊົ່ວຄາວ ຕ້ອງໄດ້ອະນຸຍາດໃນທຸກກໍລະນີເພື່ອຄວາມຍຸຕິທຳ, ໂດຍຄຳນຶງເຖິງຜົນປະໂຫຍດ ຂອງບຸກຄົນທີສາມ.

**ມາດຕາ 35 ການພິຈາລະນາຄືນໃໝ່**

ໃນເມື່ອມີການສະເໜີໃຫ້ພິຈາລະນາຄືນໃໝ່ ກ່ຽວກັບ ການອະນຸຍາດສ້າງຕັ້ງອົງການຄຸ້ມຄອງລິຂະສິດແບບລວມໝູ່ ຜູ້ສະເໜີຕ້ອງສະແດງໃຫ້ເຫັນວ່າ ມີເຫດຜົນພຽງພໍໃນການສະເໜີຂໍທົບທວນ ເງື່ອນໄຂ ຫຼື ການຕົກລົງ ທີ່ເປັນຫົວຂໍ້ໃນການສະເໜີເພື່ອໃຫ້ພິຈາລະນາຄືນໃໝ່, ກົມຊັບສິນທາງປັນຍາຕ້ອງຮັບການສະເໜີດັ່ງກ່າວ ແລະ ພິຈາລະນາຄືນໃໝ່ ຕໍ່ກັບ ເງື່ອນໄຂ ຫຼື ການຕົກລົງນັ້ນ. ການສະເໜີໃຫ້ພິຈາລະນາຄືນໃໝ່ ບໍ່ໄດ້ຜູກມັດກົມໃຫ້ຍົກເລີກເງື່ອນໄຂ ຫຼື ປ່ຽນເປັນການຕົກລົງໃໝ່, ພຽງແຕ່ໃຫ້ແນ່ໃຈວ່າ ຈະມີການພິຈາລະນາຄືນໃໝ່. ສ່ວນຂັ້ນຕອນການພິຈາລະນາຄືນໃໝ່ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ສຳລັບການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແມ່ນບໍ່ມີການພິຈາລະນາຄືນໃໝ່.

ຜູ້ສະເໜີ ຫາກບໍ່ພໍໃຈຕໍ່ຜົນການພິຈາລະນາຄືນໃໝ່, ສາມາດອຸທອນໄປຍັງຄະນະກຳມະການອຸທອນພາຍໃນ 30 ວັນ ນັບແຕ່ມື້ໄດ້ຮັບແຈ້ງການເປັນຕົ້ນໄປ.

**ມາດຕາ 36 ການຂໍອຸທອນ**

ອົງການຈັດຕັ້ງລິຂະສິດແບບລວມໝູ່ ຫຼື ບຸກຄົນອື່ນ ທີ່ດຳເນີນການກັບກົມຊັບສິນທາງປັນຍາ ກ່ຽວກັບ ການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ການອະນຸຍາດສ້າງຕັ້ງອົງການລິຂະສິດແບບລວມໝູ່ ຫາກບໍ່ເຫັນດີ ນຳການກຳນົດເງື່ອນໄຂ ຫຼື ການຕົກລົງ ຂອງກົມ ຜູ້ຮ້ອງຂໍສາມາດອຸທອນ ຫຼື ສະເໜີຄຳຂັດຄ້ານ ໄປຍັງຄະນະກຳມະການອຸທອນ ໂດຍເສຍຄ່າທຳນຽມ ແລະ ຄ່າບໍລິການ.

ພະນັກງານຂອງກົມຊັບສິນທາງປັນຍາທີ່ມີສ່ວນຮ່ວມ ໃນການອະນຸຍາດ, ການຢັ້ງຢືນ, ການປະຕິເສດ ຫຼື ການກຳນົດເງື່ອນໄຂ ຫຼື ການຕົກລົງ ຂອງຕົນທີ່ໄດ້ຖືກອຸທອນ ສາມາດໃຫ້ຄຳຊີ້ແຈງເຊັ່ນດຽວກັບ ກ່ຽວກັບ ພື້ນຖານດ້ານກົດໝາຍ ແລະ ຂໍ້ເທັດຈິງ ໃນການຕົກລົງດັ່ງກ່າວ ເພື່ອເປັນຂໍ້ມູນໃຫ້ຄະນະກຳມະການອຸທອນພິຈາລະນາ. ຜູ້ທີ່ຍື່ນອຸທອນນັ້ນ ມີໂອກາດໜຶ່ງຄັ້ງໃນການໂຕ້ແຍ້ງ ໂດຍສອດຄ່ອງກັບການກຳນົດໄວ້ໃນວັກ 2 ຂອງມາດຕາ 33 ຂອງຂໍ້ຕົກລົງສະບັບນີ້.

ຄະນະກຳມະການອຸທອນ ອາດຈະເຊີນຜູ້ຊ່ຽວຊານສະເພາະດ້ານເພື່ອໃຫ້ຄຳປຶກສາ. ຄະນະກຳມະການອຸທອນ ຕ້ອງພິຈາລະນາການອຸທອນອີງຕາມການຕົກລົງທີ່ໄດ້ດຳເນີນຕາມມາດຕານີ້ ແລະ ຕ້ອງບັນທຶກການຕົກລົງເປັນລາຍລັກອັກສອນ, ຊຶ່ງຕ້ອງໄດ້ບັນທຶກກ່ຽວກັບການຕົກລົງຂອງຄະນະກຳມະການ ແລະ ເຫດຜົນທາງດ້ານກົດໝາຍ ແລະ ຂໍ້ເທັດຈິງທີ່ກ່ຽວຂ້ອງ. ບົດບັນທຶກການຕົກລົງດັ່ງກ່າວ ຕ້ອງສົ່ງໃຫ້ຜູ້ຂໍອຸທອນເພື່ອຮັບຊາບ.

ໃນກໍລະນີຜູ້ຂໍອຸທອນ ບໍ່ສາມາດສະໜອງຂໍ້ມູນທີ່ຈຳເປັນ ຕາມທີ່ກຳນົດໄວ້ໃນ ຂໍ້ 1 ຂອງວັກ 2 ຂອງມາດຕາ 33 ຂອງຂໍ້ຕົກລົງສະບັບນີ້, ການອຸທອນດັ່ງກ່າວຖືວ່າເປັນໂມຄະ.

ໃນການສະຫຼຸບການອຸທອນ, ຄະນະກຳມະການອຸທອນ ຕ້ອງສົ່ງສຳນວນຄຳຮ້ອງຂໍອຸທອນໃຫ້ກົມຊັບສິນທາງປັນຍາ ເພື່ອດຳເນີນການຂັ້ນຕໍ່ໄປຕາມຄວາມເໝາະສົມ.

## ມາດຕາ 37 ການອຸທອນຂັ້ນຖັດໄປ

ຜູ້ຂໍອຸທອນ ທີ່ບໍ່ພໍໃຈຕໍ່ຜົນຂອງການອຸທອນຂອງກົມຊັບສິນທາງປັນຍາ ອາດຈະອຸທອນຕໍ່ຂັ້ນເທິງຖັດໄປ ເພື່ອສະເໜີຂໍໃຫ້ພິຈາລະນາຄືນໃໝ່.

ຜູ້ຂໍອຸທອນ ທີ່ບໍ່ພໍໃຈກັບການພິຈາລະນາການອຸທອນຂອງຂັ້ນເທິງຖັດໄປ ສາມາດຍື່ນອຸທອນຕໍ່ສານປະຊາຊົນ ພາຍໃນກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ.

## ມາດຕາ 38 ຄະນະກຳມະການອຸທອນ

ກົມຊັບສິນທາງປັນຍາຕ້ອງສ້າງຕັ້ງຄະນະກຳມະການອຸທອນຂອງຕົນຂຶ້ນ ເພື່ອແກ້ໄຂການອຸທອນທາງດ້ານບໍລິຫານທີ່ກ່ຽວຂ້ອງກັບ ການອະນຸຍາດ, ການຢັ້ງຢືນ, ການປະຕິເສດ ຫຼື ການກຳນົດເງື່ອນໄຂ ຫຼື ການຕົກລົງໂດຍກົມ ທີ່ກ່ຽວຂ້ອງກັບການຕິດຕາມກວດກາຂອງຕົນ ຕໍ່ກັບອົງການຈັດຕັ້ງລິຂະສິດແບບລວມໝູ່. ຄະນະກຳມະການອຸທອນຕ້ອງເປັນເອກະລາດ ຊຶ່ງຄະນະກຳມະການດັ່ງກ່າວ ອາດສ້າງຕັ້ງຂຶ້ນແບບຖາວອນ ຫຼື ຊົ່ວຄາວ. ສຳລັບ ມາດຕະຖານ ແລະ ເງື່ອນໄຂ ຂອງຜູ້ທີ່ຈະມາເປັນກຳມະການອຸທອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ບຸກຄົນທີ່ມີສ່ວນຮ່ວມໃນ ການອະນຸຍາດ, ການຢັ້ງຢືນ, ການປະຕິເສດ ຫຼື ການກຳນົດເງື່ອນໄຂ ຫຼື ການຕົກລົງ ທີ່ເປັນສາເຫດຂອງການອຸທອນ ບໍ່ສາມາດເຂົ້າຮ່ວມຢູ່ໃນຄະນະກຳມະການອຸທອນ.

## ມາດຕາ 39 ສຳນວນເອກະສານ ຫຼື ເອກະສານທີ່ຊອກບໍ່ເຫັນ

ໃນກໍລະນີທີ່ສຳນວນເອກະສານ ຫຼື ເອກະສານອື່ນໆ ທີ່ພົວພັນເຖິງຄຳຮ້ອງ ຫຼື ການດຳເນີນການອື່ນໆ ເສຍ ຫຼື ຊອກບໍ່ເຫັນ, ກົມຊັບສິນທາງປັນຍາຕ້ອງສ້າງສຳເນົາສຳນວນເອກະສານ ຫຼື ເອກະສານອື່ນໆ ທີ່ພົວພັນເຖິງຄຳຮ້ອງ ຫຼື ການດຳເນີນການອື່ນໆ ທີ່ເສຍນັ້ນຂຶ້ນໃໝ່. ໃນກໍລະນີດັ່ງກ່າວ, ກົມອາດສະເໜີ ໃຫ້ຜູ້ຍື່ນຄຳຮ້ອງ ຫຼື ເຈົ້າຂອງ ສົ່ງສຳເນົາຂໍ້ມູນ ຂອງເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານຕິດຕໍ່ພົວພັນ ຢູ່ໃນສຳນວນເອກະສານທີ່ກ່ຽວຂ້ອງ (ຖ້າມີ) ພ້ອມທັງຢັ້ງຢືນວ່າ ແມ່ນສຳເນົາທີ່ ຖືກຕ້ອງ ແລະ ຄົບຖ້ວນ ຂອງ ຜູ້ຮ້ອງຂໍ ຫຼື ເຈົ້າຂອງເອກະສານຕິດຕໍ່ທັງໝົດ ລະຫວ່າງກົມ ແລະ ບຸກຄົນດັ່ງກ່າວ ລວມທັງເອກະສານ ຫຼື ສຳນວນເອກະສານທີ່ກ່ຽວຂ້ອງ ຫຼື ຜູ້ຮ້ອງຂໍ ຫຼື ເຈົ້າຂອງນັ້ນ ຮັບຮູ້ ແຕ່ບໍ່ມີການບັນທຶກໄວ້ ກ່ຽວກັບເອກະສານຕິດຕໍ່ລະຫວ່າງເຈົ້າຂອງກັບກົມ.

# ໝວດທີ VIII
# ອົງການທີ່ຮັບຜິດຊອບຕໍ່ວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

**ມາດຕາ 40. ອົງການທີ່ຮັບຜິດຊອບ**

ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຮັບຜິດຊອບ ໃນການກຳນົດຄວາມຖືກຕ້ອງ ແລະ ສອດຄ່ອງຂອງຄຳຮ້ອງຂໍແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ການຄຸ້ມຄອງອົງການຈັດຕັ້ງລິຂະສິດແບບລວມໝູ່ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບ ໃນການຮັບຄຳຮ້ອງຂໍແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕາມການມອບໝາຍຈາກກົມ.

ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ນະຄອນ ແມ່ນປະຕິບັດຕາມການມອບໝາຍຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ.

**ມາດຕາ 41. ສິດ ແລະ ໜ້າທີ່ ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອອກ ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ກ່ຽວກັບ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;
2. ຮັບ ແລະ ພິຈາລະນາຄຳຮ້ອງ ກ່ຽວກັບ ການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດແລະ ການອະນຸຍາດສ້າງຕັ້ງອົງການຈັດຕັ້ງລິຂະສິດແບບລວມໝູ່;
3. ອອກໜັງສືຮັບຮອງ, ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບ ການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;
4. ຖອນ ຫຼື ລົບລ້າງ ໜັງສືຮັບຮອງການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;
5. ອອກ, ໂຈະ, ຖອນ ໃບອະນຸຍາດ ສ້າງຕັ້ງອົງການຈັດຕັ້ງລິຂະສິດແບບລວມໝູ່;
6. ຄົ້ນຄວ້າ ແລະ ພິຈາລະນາແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບ ການອະນຸຍາດສ້າງຕັ້ງອົງການຈັດຕັ້ງລິຂະສິດແບບລວມໝູ່;
7. ຄຸ້ມຄອງ ແລະ ຕິດຕາມກວດກາ ອົງການຈັດຕັ້ງລິຂະສິດແບບລວມໝູ່;
8. ສົ່ງເສີມ ແລະ ຊຸກຍູ້ ການສ້າງຕັ້ງ ແລະ ເຄື່ອນໄຫວຂອງອົງການຈັດຕັ້ງລິຂະສິດແບບລວມໝູ່;
9. ຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງລິຂະສິດແບບລວມໝູ່;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງ ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 42. ສິດ ແລະ ໜ້າທີ່ ຂອງພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ**

ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຄຳຮ້ອງ ແລະ ກວດຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານ ກ່ຽວກັບ ການແຈ້ງຂໍ້ມູນ

ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເພື່ອນຳສົ່ງໃຫ້ກົມຊັບສິນທາງປັນຍາ;

2. ຄຸ້ມຄອງ ແລະ ຕິດຕາມກວດກາ ອົງການຈັດຕັ້ງລິຂະສິດແບບລວມໝູ່ ຕາມລະບຽບການ;
3. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

## ໝວດທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 43. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 44. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ ແລະ ຂໍ້ຕົກລົງໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

**ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**